## ບົດຄຳເຫັນຂອງເຈົ້າເມືອງ - ເມືອງເຊບັ້ງໄຟ
## ກ່ຽວກັບການຄຸ້ມຄອງໄພພິບັດຈາກໄພນ້ຳຖ້ວມຂອງເມືອງ

ຄຳວ່າ : ໄພພິບັດ ແມ່ນສິ່ງທີ່ເປັນອັນຕະລາຍຕໍ່ຊີວິດ ແລະ ຊັບສິນຂອງມະນຸດກໍຄືທຳມະຊາດທັງປວງ ຊຶ່ງພັກ ແລະ ລັດຖະບານ ຕະຫລອດເຖິງປະຊາຊົນບັນດາເຜົ່າຂອງພວກເຮົາຍາມໃດກໍ່ບໍ່ໄດ້ເພິ່ງປາດຖະໜາຢາກປະສົບພົບພໍ້ເລີຍ, ອຸທົກກະໄພ ຫລືວ່າ ໄພນ້ຳຖ້ວມ ກໍແມ່ນນຶ່ງຂອງໄພພິບັດທີ່ເກີດຂຶ້ນຢູ່ພາຍໃນເມືອງຂອງພວກເຮົາ.

ຍ້ອນທີ່ຕັ້ງພູມສັນຖານຂອງເມືອງ ມີພື້ນທີ່ເປັນທົ່ງຮາບ ແລະ ຕັ້ງຢູ່ແຄມແມ່ນ້ຳເຊບັ້ງໄຟທາງທິດໃຕ້ ພ້ອມທັງມີສາຍຫ້ວຍຫລາຍສາຍທີ່ເປັນບ່ອນນຳເອົານ້ຳຈາກທົ່ງນາລົງສູ່ແມ່ນ້ຳ ຫລືວ່າ ນຳເອົານ້ຳຈາກແມ່ນ້ຳເຊຂຶ້ນສູ່ທົ່ງນາ ເຊິ່ງເປັນສາຍເຫດຕົ້ນຕໍພາໃຫ້ເກີດໄພນ້ຳຖ້ວມໃນແຕ່ລະປີທີ່ມີປະລິມານຫລາຍໜ້ອຍແຕກຕ່າງກັນ,ໂດຍສະເພາະນັບແຕ່ປີ 2007 ມາເຖິງປີ 2009 ນີ້ ອັນໄດ້ເຮັດໃຫ້ເກີດມີຜົນເສຍຫາຍ ແລະ ພົບກັບຄວາມຫຍຸ້ງ ຍາກຫລາຍດ້ານຕາມມາເປັນຕົ້ນແມ່ນ: ເຂົ້ານາປີ , ເຄື່ອງປູກຂອງຝັງ, ສະລ້ຽງປາ ຫລືວ່າ ບັນດາສັດລ້ຽງຕ່າງໆ ຂອງປະຊາຊົນ.

ການຕອບໂຕ້ໄພນ້ຳຖ້ວມໃນໄລຍະຜ່ານມາເຫັນວ່າມີລັກສະນະເປັນໄປຕາມມີຕາມເກີດຍັງບໍ່ທັນມີການຈັດຕັ້ງຢ່າງຄັກແນ່ ເຮັດໃຫ້ການວາງແຜນ, ການຕອບໂຕ້ ແລະ ການບູລະນະຟື້ນຟູ ຍັງບໍ່ທັນໄດ້ຮັບຜົນດີເທົ່າທີ່ຄວນ. ນັບແຕ່ປີ 2007 ເປັນຕົ້ນມາໄດ້ມີໂຄງການສົ່ງເສີມການຈັດຕັ້ງປະຕິບັດ ແຜນງານກະກຽມປ້ອງກັນໄພນ້ຳຖ້ວມລະດັບແຂວງ, ລະດັບເມືອງ ແລະ ໃນລະດັບຊຸມຊົນ ເມືອງພວກເຮົາກໍໄດ້ມີການແຕ່ງຕັ້ງຄະນະກຳມະການຄຸ້ມຄອງ ແລະ ຕອບໂຕ້ໄພນ້ຳຖ້ວມຂື້ນ ແລະ ກໍໄດ້ຮັບການຝຶກອົບຮົມຈາກອົງການທີ່ໃຫ້ການສະໜັບສະໜູນແລ້ວ, ຈາກນັ້ນມາຄະນະກຳມະການດັ່ງກ່າວກໍໄດ້ມີການຂຽນແຜນການຕອບໂຕ້ໄພນ້ຳຖ້ວມຂຶ້ນເຮັດໃຫ້ການປະຕິບັດມາດຕະການຕອບໂຕ້ໄພນ້ຳຖ້ວມກໍເຫັນວ່າໄດດີຂຶ້ນກວ່າເກົ່າເຊັ່ນ : ການກະກຽມສະຖານທີ່ຮອງຮັບຄົນ, ສັດລ້ຽງ ແລະ ພາຫະນະຮັບໃຊ້ຕ່າງໆ ໃນເວລາເກີດໄພນ້ຳຖ້ວມ.

ພ້ອມກັນນັ້ນ, ຄະນະກຳມະການດັ່ງກ່າວຍັງໄດ້ລົງເຄື່ອນໄຫວໂຄສະນາຊວນເຊື່ອຢູ່ຕາມບັນດາບ້ານເປົ້າໝາຍທຸກບ້ານເພື່ອເປັນການປູກຈິດສຳນຶກ, ສ້າງຄວາມເຂົ້າໃຈຫລາຍຂຶ້ນເຖິງໄພອັນຕະລາຍທີ່ເກີດຈາກໄພນ້ຳຖ້ວມໃຫ້ແກ່ປະຊາຊົນໄດ້ຢ່າງທົ່ວເຖິງ, ພ້ອມນັ້ນ ກໍຍັງໄດ້ນຳເອົາວຽກງານດັ່ງກ່າວນີ້ເຂົ້າໄປເສີມຫລັກສູດການຮຽນ-ການສອນຢູ່ໃນບັນດາຊັ້ນຮຽນຕ່າງໆເພື່ອໃຫ້ຄູອາຈານ ແລະ ນ້ອງນັກຮຽນໄດ້ມີຄວາມຮູ້,ເຂົ້າໃຈຕໍ່ສິ່ງດັ່ງກ່າວອີກດ້ວຍ.

ສິ່ງທີ່ກ່າວມາໃນຂ້າງເທິງນີ້ ມັນກໍເປັນການກຽມຄວາມພ້ອມຕອບໂຕ້ໄພນ້ຳຖ້ວມທັງສາມໄລຍະຄື : ກ່ອນເກີດ, ກຳລັງເກີດ ແລະ ພາຍຫລັງການເກີດ ເຮັດໃຫ້ການປະຕິບັດໜ້າທີ່ຂອງທຸກພາກສ່ວນຢູ່ພາກສະໜາມໄດ້ມີຄວາມຄ່ອງແຄ້ວຂຶ້ນກວ່າເກົ່າ ແລະ ທັນກັບສະພາບການອີກດ້ວຍ, ທັງເປັນການສະສົມບົດຮຽນໃນການສ້າງແຜນຕອບໂຕ້ນັບມື້ດີຂຶ້ນ ແລະ ມີປະສິດທິຜົນສູງຂຶ້ນ.

ສິ່ງສຳຄັນຈຳເປັນອີກອັນນຶ່ງໃນທັດສະນະສ່ວນຕົວ ຂ້າພະເຈົ້າຄິດວ່າໃນການດຳເນີນວຽກງານໃດໆກໍຕາມຈະມີຜົນສຳເລັດຢ່າງມີປະສິດຜົນສູງໄດ້ກໍ່ເມື່ອມັນມີປັດໄຈບາງຢ່າງຈຳເປັນດັ່ງນີ້: ຄົນ ຫລື ບັນດາບຸກຄະລະກອນທີ່ເຮັດນີ້ຕ້ອງເກັ່ງ, ມີຄວາມຮັບຜິດຊອບສູງ, ມີທັດສະນະຄິດປະດິດສ້າງຕໍ່ໜ້າທີ່ວຽກງານທີ່ຕົນຮັບຜິດຊອບ, ມີການວາງແຜນທີ່ດີຖືກຕ້ອງກັບສະພາບທ້ອງຖິ່ນ, ປັດໄຈສອງ ແມ່ນງົບປະມານຮັບໃຊ້,ພາຫະນະ ກໍຄື ວັດຖຸອຸປະກອນຮັບໃຊ້ຕ້ອງພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ, ປັດໄຈທີສາມ ແມ່ນການປະສານສົມທົບວຽກງານແຕ່ລະຂັ້ນໃຫ້ຖືກຕ້ອງເໝາະສົມ ມີຄວາມສາມັກຄີດີໃນການເຮັດວຽກງານຮ່ວມກັນ. ທັງໝົດນີ້ ຈຶ່ງຈະເຮັດໃຫ້ວຽກງານຕ່າງໆເວົ້າລວມ, ເວົ້າສະເພາະແມ່ນການເຮັດວຽກງານຄຸ້ມຄອງໄພພິບັດ ຕອບໂຕ້ກັບໄພນ້ຳຖ້ວມກໍຈະໄດ້ຮັບຜົນສຳເລັດເປັນຢ່າງດີ.

ໃນນາມຕາງໜ້າໃຫ້ແກ່ຄະນະພັກ-ອົງການປົກຄອງເມືອງເຊບັ້ງໄຟ ແລະ ປະຊາຊົນບັນດາເຜົ່າພາຍໃນເມືອງຂ້າພະເຈົ້າ ຂໍສະແດງຄວາມຄອບອົກຄອບໃຈເປັນຢ່າງສູງມາຍັງອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ໂດຍສະເພາະແມ່ນຜູ້ທີ່ໃຫ້ການສະໜັບສະໜູນໂຄງການກຽມພ້ອມປະຕິບັດ ການຄຸ້ມຄອງປ້ອງກັນໄພນ້ຳຖ້ວມໃນລະດັບແຂວງ, ເມືອງ ແລະ ຊຸມຊົນ ເຮັດໃຫ້ແຜນການກຽມພ້ອມ ປ້ອງກັນ ແລະ ຕອບໂຕ້ໄພນ້ຳຖ້ວມຂອງເມືອງພວກຂ້າພະເຈົ້າໄດ້ຖືກສ້າງຂຶ້ນ ແລະ ປັບປຸງໃຫ້ສອດຄ່ອງກັບສະພາບຈຸດພິເສດຂອງທ້ອງຖິ່ນຮາກຖານແລະກໍຫວັງຢ່າງຍິ່ງວ່າ ຈະໄດ້ຮັບການສະໜັບສະໜູນຊ່ວຍເຫລືອຕໍ່ໄປອີກ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດມາດຕະການຫລຸດຜ່ອນທີ່ເປັນໂຄງສ້າງຄື: ການກໍ່ສ້າງທົນທາງ ຄູກັນນ້ຳແຕ່ບ້ານໜອງບອນເມືອງເຊບັ້ງໄຟຕິດຕໍ່ໃສ່ເຂດເມືອງໜອງບົກ, ການກໍ່ສ້າງປະຕູນ້ຳຢູ່ຫ້ວຍລາຍພາຍບ້ານດ້າງທ່າ, ການຂຸດຄອງລະບາຍນ້ຳອອກຈາກທົ່ງນາທີ່ຖືກນ້ຳຖ້ວມຂັງພາຍຫລັງນ້ຳລົດລົງ ຫລື ຫລັງຝົນຕົກໜັກນ້ຳບໍ່ມີຄອງລະບາຍອອກ ເປັນຕົ້ນແມ່ນຢູ່ທົ່ງນາຂອງຊາວບ້ານໜອງບອນ, ບ້ານດ້າງທ່າ ແລະ ສ່ວນນຶ່ງຂອງທົ່ງນາບ້ານບຶງທົວນາ. ໄປພ້ອມກັນນັ້ນ ມາດຕະການຫລຸດຜ່ອນທີ່ບໍ່ແມ່ນໂຄງສ້າງແຕ່ກໍມີຄວາມຈຳເປັນຫລາຍ ເປັນຕົ້ນແມ່ນການສົ່ງເສີມ ຄວາມຮູ້, ຄວາມສາມາດໃຫ້ແກ່ທີມງານ, ພະນັກງານ, ທະຫານ, ຕຳຫລວດ ຕະຫລອດເຖິງປະຊາຊົນບັນດາເຜົ່າ ກໍ່ຕ້ອງໄດ້ຈັດຕັ້ງປະຕິບັດໃຫ້ທົ່ວເຖິງ ແລະ ເປັນປົກະຕິທຸກໆປີ ເຊັ່ນດຽວກັນ.

ຂໍອວຍພອນໄຊມາຍັງອົງການທີ່ສະໜັບສະໜູນ, ທີມງານ ຂັ້ນແຂວງ, ເມືອງ ແລະ ຊຸມຊົນ ຈົ່ງມີສຸຂະພາບເຂັ້ມແຂງ ແຂງແຮງ ມີອາຍຸໝັ້ນຂວັນຍືນ ປະສົບຜົນສຳເລັດໃນໜ້າທີ່ການງານທຸກປະການ.

<u>ເຈົ້າເມືອງ - ເມືອງເຊບັ້ງໄຟ</u>




ບຸນຫວາຍ ສີລີວັນເມງທອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

✦✦✦✦✦✦✦✦✦✦✦✦

ແຂວງຄຳມ່ວນ

ເມືອງເຊບັ້ງໄຟ

ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ເລກທີ...770......./ ຈມ

# ແຜນການກຽມພ້ອມຕ້ານໄພນ້ຳຖ້ວມປະຈຳປີ 2009 - 2010

***ບ່ອນອີງ :***

- ອີງຕາມແຜນພັດທະນາເສດຖະກິດສັງຄົມ 05 ປີ ຄັ້ງທີ III ປີ 2004 ຂອງເມືອງເຊບັ້ງໄຟ
- ອີງຕາມ ຂໍ້ຕົກລົງແຕ່ງຕັ້ງຂອງເຈົ້າເມືອງໆເຊບັ້ງໄຟ ເລກທີ 95 / ຈມ ລົງວັນທີ 02/ 03 /2009 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ.
- ອີງຕາມບົດສະຫຼຸບລາຍງານຂອງຄະນະກຳມະການຕ້ານແລ້ງຕ້ານຖ້ວມເມືອງເຊບັ້ງໄຟ ຄັ້ງວັນທີ 23 / 01 / 2009.

## 1. ພາກສະເໜີ.

### 1.1. ສະພາບຄວາມເປັນມາ

ຍ້ອນທີ່ຕັ້ງພູມສັນຖານຂອງເມືອງຕັ້ງຢູ່ແຄມແມ່ນ້ຳໃຫຍ່ສາຍເຊບັ້ງໄຟ, ພ້ອມທັງມີຫ້ວຍໜອງຄອງບຶງເປັນຈຳນວນຫຼາຍ, ເຊິ່ງເປັນເຫດການໜຶ່ງເຮັດໃຫ້ເມືອງເຊບັ້ງໄຟ ມີຄວາມສ່ຽງສູງຕໍ່ການເກີດໄພພິບັດຈາກນ້ຳຖ້ວມ, ໄລຍະຜ່ານມາໄດ້ຖືກໄພທຳມະຊາດຂົ່ມຂູ່ເກືອບທຸກໆປີ,ໃນນັ້ນມີທັງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ແຕ່ໄພນ້ຳຖ້ວມຈະສົ່ງຜົນກະທົບຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ ພາຍໃນເມືອງຢ່າງຫຼວງຫຼາຍ,ຜົນກະທົບດັ່ງກ່າວລວມມີບັນດາຂົງເຂດຕ່າງໆ ເຊັ່ນ : ຂົງເຂດສັງຄົມ, ຫຼືການປົກຄອງ, ຂົງເຂດເສດຖະກິດ, ຂົງເຂດວັດທະນະທຳດັ່ງນີ້ເປັນຕົ້ນ.

### 1.2. ປະສົບການໄພນ້ຳຖ້ວມໃນໄລຍະຜ່ານມາ.

ໃນຮອບ 10 ປີ ຜ່ານມາ ( 1999-2009 ) ຜົນກະທົບຈາກໄພນ້ຳຖ້ວມໄດ້ເຮັດໃຫ້ພວກເຮົາຄະນະພັກ ອົງການປົກຄອງແຕ່ລະຂັ້ນ ( ເມືອງ, ບ້ານ ) ຕະຫຼອດຮອດປະຊາຊົນ ໃນເຂດທີ່ຖືກຜົນກະທົບໄດ້ທັນເອົາບົດຮຽນ ແລະ ປະສົບການຫຼາຍດ້ານເຊັ່ນ : ການກະກຽມຕອບຕ້ານໄພນ້ຳຖ້ວມ, ການປຸກລະດົມຂົນຂວາຍພາກສ່ວນຕ່າງໆມີສ່ວນຮ່ວມ ໃນການເຄື່ອນໄຫວ ປະຕິບັດກິດຈະກຳປ້ອງກັນຕ້ານ ແລະ ທົດແທນຜົນກະທົບຈາກໄພນ້ຳຖ້ວມ ສິ່ງສຳຄັນຄະນະກຳມະການຂັ້ນເມືອງແມ່ນໄດ້ເອົາໃຈໃສ່ເປັນພິເສດຕໍ່ການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບຂອງຕົນແຕ່ລະດ້ານຈາກໄພນ້ຳຖ້ວມ ໃນຮອບ 10 ປີ ຜ່ານມາ

( 1999-2008 ) ພໍສັງລວມໂດຍສັງເຂບ ດັ່ງຕາຕະລາງຕໍ່ໄປນີ້ :

**ຕາຕະລາງໄພນ້ຳຖ້ວມບ້ານພາຍໃນເມືອງແຕ່ປີ 1999-2008**

| | | | | | | | | | |
|---|---|---|---|---|---|---|---|---|---|
| 1999 | 2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
| 15 | 14 | 15 | 15 | 11 | 18 | 20 | 10 | 10 | 10 |

( ຂໍ້ມູນໄດ້ມາຈາກອົງການປົກຄອງທ້ອງຖິ່ນ ( ຫ້ອງວ່າການ ))

## 1.3. ຈຸດປະສົງ ແລະ ຍຸດທະສາດ

### 1.3.1. ຈຸດປະສົງ

- ເພື່ອເປັນການເຊື່ອມສານແຜນຍຸດທະສາດ ໃນການຄຸ້ມຄອງຝໄພພິບັດແຫ່ງຊາດ ແລະ ລະດັບແຂວງ.
- ເພື່ອເປັນການກະກຽມຄວາມພ້ອມສຳລັບການປ້ອງກັນ ,ສະກັດກັ້ນ, ຕອບໂຕ້ ແລະ ຟື້ນຟູທົດແທນຜົນກະທົບຈາກໄພພິບັດຊຶ່ງອາດສາມາດເກີດຂື້ນໄດ້ໃນ ທຸກໆປີ.
- ເພື່ອເປັນບ່ອນອີງໃນການເຄື່ອນໄຫວຕິດຕາມຊຸກຍູ້ ແລະ ສະຫຼຸບຕີລາຄາປະເມີນຜົນຂອງການຈັດຕັ້ງປະຕິບັດແຜນງານ,ກິດຈະກຳຕ່າງໆ ສຳລັບປ້ອງກັນ,ສະກັດກັ້ນ,ຕອບໂຕ້ ແລະ ຟື້ນຟູ ທົດແທນຜົນກຳທົບຈາກໄພພິບັດດັ່ງກ່າວ.
- ເປັນການເອື້ອອຳນວຍຄວາມສະດວກໃຫ້ແກ່ຄະນະກຳມະການໄພພິບັດຂັ້ນເມືອງ,ແຂວງ ພ້ອມກັບການນຳຂອງເມືອງ,ແຂວງ ໃນການຊີ້ນຳໆພາການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ຂອງບັນດາທີມງານ ແລະ ຄະນະກຳມະການຢູ່ພາກສະໜາມແຕ່ລະໄລຍະ ແຕ່ລະທ້ອງຖິ່ນຢ່າງໄກ້ສິດ, ແທດເໝາະກັບສະພາວະຄວາມເປັນຈິງ.
- ເປັນເຄື່ອງມືອັນສຳຄັນໃຫ້ແກ່ທີມງານຕ່າງໆ ທີ່ເຮັດວຽກໃນພາກສະໜາມໄດ້ມີຄວາມຄ່ອງແຄ້ວ ແລະ ວ່ອງໄວທ່ວງທັນກັບສະພາບການພ້ອມທັງເປັນການສ້າງລະບົບແບບແຜນວິທີເຮັດວຽກຢ່າງມີຄວາມເປັນເອກະພາບ ແລະ ມີປະສິດທິຜົນສູງ.

### 1.3.2. ການຄຸ້ມຄອງໄພພິບັດ.

- ກຳນົດຂົງເຂດ ແລະ ພື້ນທີ່ໆມີຄວາມສ່ຽງສູງ ອັນເປັນຈຸດຫຼໍ່ແຫຼມຂອງການເກີດໄພພິບັດນ້ຳຖ້ວມໄປຄວບຄູ່ກັບການສ້າງແຜນງານ, ໂຄງການ ແລະ ກິດຈະກຳສຳລັບການກະກຽມການປ້ອງກັນ,ສະກັດກັ້ນ,ຕອບໂຕ້ ແລະ ຟື້ນຟູທົດແທນຜົນກະທົບຈາກໄພພິບັດດັ່ງກ່າວ, ພ້ອມທັງສົ່ງເສີມປົກປັກຮັກສາສິ່ງແວດລ້ອມແລະ ແຫຼ່ງຊັບພະຍາກອນຂອງທ້ອງຖິ່ນ ໃຫ້ໝັ້ນຄົງຕະຫຼອດໄປ.
- ສຸມທຸກກຳລັງແຮງ ແລະ ໝູນໄຊ້ຢ່າງປະດິດສ້າງຂອງທ່າແຮງທີ່ບົ່ມຊ້ອນພາຍໃນເມືອງ, ທ້ອງຖິ່ນ, ຮາກຖານໄປພ້ອມໆກັບການຍາດແຍ່ງເອົາທຸກກາລະໂອກາດເພື່ອປະກອບສ່ວນເຂົ້າໃນຂະບວນການເຄື່ອນໄຫວທີ່ມີປະສິດທິພາບບົນພື້ນຖານການປະຕິບັດລະບົບບໍລິຫານ ແລະ ຄຸ້ມຄອງອັນມີວິທະຍາສາດ.
- ໄປຄຽງຄູ່ກັບການນຳໄຊ້ທ່າແຮງບົ່ມຊ້ອນບັນດາແຫຼ່ງຊັບພະຍາກອນທີ່ມີໃນທ້ອງຖິ່ນຕ້ອງໄດ້ມີການຍາດແຍ່ງຂໍການສະໜັບສະໜູນ,ຂໍການຊ່ວຍເຫຼືອທາງດ້ານແຫຼ່ງທຶນ ແລະ ວັດຖຸອຸປະກອນຈາກພາກສ່ວນຕ່າງໆຂອງສັງຄົມເຊັ່ນ: ອົງການຈັດຕັ້ງສາກົນ, ນັກທຸລະກິດ, ຫ້າງຮ້ານ, ແມ່ຄ້າຊາວຂາຍ, ໂດຍສະເພາະແມ່ນໂຄງການ ADPC ຂອງອົງການ MRC ດັ່ງນີ້ເປັນຕົ້ນ.

- ຖືເອົາການປ້ອງກັນ ແລະ ການຫຼຸດຜ່ອນຜົນກະທົບຈາກໄພພິບັດເປັນບັນຫາຕົ້ນຕໍແລະ ເອົາການຕອບຕ້ານ ຟື້ນຟູທົດແທນເປັນບັນຫາສຳຄັນແນ່ໃສ່ເພື່ອຫຼຸດຜ່ອນການສູນເສຍຊີວິດ ແລະ ຊັບສິນຂອງລັດ,ຂອງປະຊາຊົນ ອັນເກີດຈາກໄພພິບັດດັ່ງກ່າວ.

- ຍາດແຍ່ງຂໍການສະໜັບສະໜູນສຳລັບການກໍ່ສ້າງພື້ນຖານໂຄງລ່າງທີ່ເປັນຍຸດທະສາດສຳລັບການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຈາກໄພພິບັດເຊັ່ນ : ການສ້າງທົ່ນທາງ, ຄູກັ້ນນ້ຳເລາະລຽບຕາມແຄມນ້ຳເຊ,ການຍົກລະດັບຄວາມອາດສາມາດທີ່ປ່ຽມລົ້ນໄປດ້ວຍປະສິດທິພາບສູງຂອງລະບົບຊົນລະປະທານ ແລະ ການຂຸດຄອງລະບາຍນ້ຳອອກຈາກເຂດທີ່ມີນ້ຳຖ້ວມຂັງລົງສູ່ນ້ຳເຊບັ້ງໄຟ ແລະ ອື່ນໆຕາມຄວາມເໝາະສົມ.

## <u>1.4. ຄວາມຮັບຜິດຊອບ ແລະ ສິດຂອບເຂດຂອງແຜນການ.</u>

### <u>1.4.1 ພາລະບົດບາດຂອງເຈົ້າເມືອງ</u>

- ເຈົ້າເມືອງແມ່ນຜູ້ນຳສູງສຸດພາຍໃນເມືອງ, ມີສິດອະນຸມັດສັ່ງການ ອອກຂໍ້ກຳນົດກົດລະບຽບຕ່າງໆທີ່ພົວພັນເຖິງການເຄື່ອນໄຫວຂອງຄະນະກຳມະການ ສຳລັບການປ້ອງກັນ, ສະກັດກັ້ນ,ຕອບໂຕ້ ແລະ ຟື້ນຟູທົດແທນຜົນກະທົບຈາກໄພພິບັດຊຶ່ງອາດສາມາດເກີດຂຶ້ນໄດ້ໃນທຸກປີ.

### <u>1.4.2. ພາລະບົດບາດຂອງຄະນະກຳມະການຂັ້ນເມືອງ.</u>

- ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງແມ່ນຖືກແຕ່ງຕັ້ງຂຶ້ນໂດຍທ່ານເຈົ້າເມືອງຊຶ່ງພາຍໃຕ້ການເປັນປະທານຂອງທ່ານຮອງເຈົ້າເມືອງ ແລະ ປະກອບເອົາບັນດາທ່ານຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງເປັນຄະນະກຳມະການ,ຄະນະກຳມະການຂັ້ນເມືອງ, ມີຄະນະກອງເລຂາ ຊຶ່ງແມ່ນຮອງຫົວໜ້າຫ້ອງວ່າການປົກຄອງເມືອງເປັນຫົວໜ້າ ແລະ ເຮັດໜ້າທີ່ເປັນເສນາທິການໃຫ້ແກ່ຄະນະກຳມະການດັ່ງກ່າວ.

- ຄະນະກຳມະການມີພາລະບົດບາດໜ້າທີ່ກຳນົດແນວທາງ ແລະ ຍຸດທະວິທີໃນການສ້າງໂຄງການດຳເນີນງານ,ແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆເພື່ອກະກຽມຄວາມພ້ອມສຳລັບປ້ອງກັນ,ສະກັດກັ້ນ,ຕອບໂຕ້ ແລະ ຟື້ນຟູທົດແທນຜົນກຳທົບຈາກໄພພິບັດແນໃສ່ຫຼຸດຜ່ອນການສູນເສຍຊີວິດຂອງລັດ ແລະ ປະຊາຊົນບັນດາເຜົ່າ.

- ຕິດຕາມກວດກາ ແລະ ເກັບກຳສະພາບການຕ່າງໆທີ່ເກີດຂື້ນ ໃນເວລາເຄື່ອນໄຫວຈັດຕັ້ງປະຕິບັດແຜນງານໂຄງການ ໃນແຕ່ລະໄລຍະເຊັ່ນ : ກ່ອນການເກີດໄພພິບັດ,ໄລຍະເກີດໄພພິບັດ ແລະ ໄລຍະຫຼັງໄພພິບັດ.

- ເຄື່ອນໄຫວຈັດຕັ້ງປະຕິບັດແຜນງານ ໂຄງການ ແລະ ກິດຈະກຳຕ່າງໆ ໃນແຕ່ລະໄລຍະຈັດຕັ້ງກອງປະຊຸມສະຫຼຸບລັງລວມຜົນການເຄື່ອນໄຫວ ແລະ ກຳນົດແຜນການແຕ່ລະໄລຍະ ພ້ອມທັງລາຍງານຜົນການເຄື່ອນໄຫວຂອງຕົນໃຫ້ແກ່ເຈົ້າເມືອງ ແລະ ຄະນະກຳມະການຂັ້ນແຂວງຢ່າງເປັນປົກກະຕິ ນອກນັ້ນຖ້າຫາກເກີດກໍລະນີຈຳເປັນຮີບດ່ວນ ຄະນະກຳມະການສາມາດຈັດກອງປະຊຸມວິສາມັນຂຶ້ນເພື່ອຕົກລົງແກ້ໄຂບັນຫາໃຫ້ທ່ວງທັນກັບສະພາບການ.

### <u>1.4.3. ພາລະບົດບາດຂອງຄະນະກອງເລຂາຂັ້ນເມືອງ.</u>

- ສຳລັບກອງເລຂາມີພາລະບົດບາດ ແລະ ຄວາມຮັບຜິດຊອບເປັນເສນາທິການ ໃຫ້ຄະນະກຳມະການເຊັ່ນ: ການເກັບກຳຂໍ້ມູນສັງລວມຂໍ້ມູນ, ວິໄຈຂໍ້ມູນ, ຮ່າງແຜນງານໂຄງການ,ການເຄື່ອນໄຫວ ແລະ ບັນດານິຕິກຳຕ່າງໆໃຫ້ແກ່ຄະນະກຳມະການຕິດຕາມເຝົ້າລະວັງຮັບການລາຍງານຈາກບັນດາທີມງານທີ່ກ່ຽວຂ້ອງເຄື່ອນໄຫວ

ຕິດຕາມປະສານງານກັບພາກສ່ວຍຕ່າງໆທີ່ກ່ງວຂ້ອງນັບທັງຂັ້ນເມືອງ ແລະ ຂັ້ນແຂວງ ກະກຽມບັນດາປັດໃຈຈຳເປັນສຳລັບການເຄື່ອນໄຫວຕ່າງໆຂອງຄະນະກຳມະການ,ທີມງານ, ກຽມຄວາມພ້ອມສຳລັບການຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນ ຂອງຄະນະກຳມະການໃນແຕ່ລະໄລຍະ.

## 1.5 ວັນເດືອນປີກະກຽມແຜນການ ແລະ ບັນທຶກປັບປຸງແຜນການ.

### 1.5.1 ປີກະກຽມແຜນ ແລະ ໝົດອາຍຸແຜນ.

- ກະກຽມແຜນການ ເດືອນກຸມພາ ປີ 2009.
- ອາຍຸຂອງແຜນການ ເດືອນ ທັນວາ ປີ 2009.

### 1.5.2 ການທົບທວນ ແລະ ປັບປຸງແຜນ

- ທົບທວນແຜນການຫຼັງຈາກນ້ຳຖ້ວມ ແລະ ວາງແຜນເພື່ອກຳນົດມາດຕະການປ້ອງກັນໄພນ້ຳຖວມ.
- ປັບປຸງແຜນການເດືອນກໍລະກົດ ປີ 2009

# 2. ສະພາບລວມຂອງເມືອງ

## 2.1 ພື້ນທີ່ກວມລວມ

### 2.1.1 ສະພາບທີ່ຕັ້ງພູມສັນຖານຂອງເມືອງ

- ເມືອງເຊບັ້ງໄຟເປັນເມືອງໜຶ່ງທີ່ຕັ້ງຢູ່ດ້ານໃຕ້ຂອງແຂວງຄຳມ່ວນ ທິດເໜືອຕິດກັບເມືອງທ່າແຂກ, ທິດໄຕ້ຕິດກັບເມືອງໄຊບູລີແຂວງສະຫວັນນະເຂດມີນ້ຳເຊບັ້ງໄຟເປັນເຂດແດນ, ທິດຕາເວັນອອກຕິດກັບເມືອງມະຫາໄຊ ແລະ ເມືອງໄຊບົວທອງ ແລະ ທິດຕາເວັນຕົກຕິດກັບເມືອງໜອງບົກ.
- ເມືອງເຊບັ້ງໄຟມີເນື້ອທີ່ 971 ກິໂລຕາແມັດ, ໃນນັ້ນມີເນືອທີ່ທຳການຜະລິດກະສິກຳຈຳນວນ 7680 ເຮັກຕາ, ເນື້ອທີ່ປູກເຂົ້າ 6680 ເຮັກຕາ, ເນື້ອທີ່ສວນ 1000 ເຮັກຕາ, ເນື້ອທີ່ປ່າໂຄກ 21,807,6 ເຮັກຕາ, ເນື້ອທີ່ປ່າດົງ 22,340,7 ເຮັກຕາ, ເປັນເມືອງທີ່ມີອຸນນະພູມອົບອຸ່ນຂ່ອນຂ້າງຮ້ອນ ມີ 02 ລະດູຄື: ລະດູແລ້ງ ແລະ ລະດູຝົນ ປະລິມານນ້ຳຝົນສະເລ່ຍ ໃນປີນ້ຳຖ້ວມຫຼາຍປະມານ 20,70 ມິລິແມັດ, ມີນ້ຳຖ້ວມປະມານກາງ 17,00 ມິລິແມັດ ແລະ ມີນ້ຳຖ້ວມໜອ່ຍປະມານ 13, 67 ມິລິແມັດ.
- ບັນດາດິນທີຖືກນຳໄຊ້ສ່ວນຫຼວງຫຼາຍແມ່ນການຜະລິດກະສິກຳ ( ປູກຝັງ, ລ້ຽງສັດ ) ຊຶ່ງການປູກຝັງສ່ວນໃຫຍ່ແມ່ນການປູກເຂົ້ານາປີ,ນາແຊງ ນອກນັ້ນແມ່ນການປູກພຶດຜັກທັນຍາຫານຕ່າງໆ.
- ຮູບແບບຂອງການຄຸ້ມຄອງນຳໄຊ້ທີ່ດິນສ່ວນຫຼວງຫຼາຍແມ່ນຂຶ້ນທະບຽນທີ່ດິນ ແລະ ໃບແຈ້ງພາສີທີ່ດິນ ເຊິ່ງກວມເຖິງ 70%

( ຂໍ້ມູນໄດ້ມາຈາກຫ້ອງການແຜນການ-ການລົງທຶນ )

### 2.1.2 ແຜນທີ່ເມືອງເຊບັ້ງໄຟ.

### 2.1.3 ສະພາບດ້ານການປົກຄອງ

- ເມືອງເຊບັ້ງໄຟປະກອບມີ 07 ກຸ່ມບ້ານ, ມີ 45 ບ້ານ, ມີ 4381 ຫຼັງຄາເຮືອນມີ 5205 ຄອບຄົວ, ປະຊາກອນທັງໝົດມີ 25.683 ຄົນ, ຍິງ 13.117ຄົນ, ລາຍລະອຽດດັ່ງຕາຕະລາງລຸ່ມນີ້ :

## ຕາຕະລາງສັງລວມດ້ານການປົກຄອງ

| ລ/ດ | ຊື່ກຸ່ມບ້ານ | ຈຳນວນ ບ້ານ | ຈຳນວນ ຫຼັງຄາ ເຮືອນ | ຈຳນວນ ຄອບຄົວ | ຈຳນວນພົນລະເມືອງ | | ໝາຍເຫດ |
|---|---|---|---|---|---|---|---|
| | | | | | ລວມ | ຍິງ | |
| 01 | ບ້ານ ຫາດຄຳຮຽງ | 3 | 636 | 895 | 4054 | 2059 | |
| 02 | ບ້ານບຶງຫົວນາ | 7 | 915 | 1066 | 6226 | 3372 | |
| 03 | ບ້ານຍາງໃຫຍ່ | 8 | 907 | 1023 | 4433 | 2278 | |
| 04 | ບ້ານສັງ | 6 | 542 | 658 | 3162 | 1574 | |
| 05 | ບ້ານສົ້ມ | 7 | 529 | 577 | 2887 | 1456 | |
| 06 | ບ້ານນາທານ | 3 | 205 | 255 | 1349 | 670 | |
| 07 | ບ້ານນາຊອຍ | 11 | 620 | 722 | 3572 | 1708 | |
| | | 45 | 4381 | 5205 | 25683 | 13117 | |

( ຂໍ້ມູນໄດ້ມາຈາກອົງການປົກຄອງທ້ອງຖິ່ນ( ຫ້ອງວ່າການ )

**2.2 ລາຍລະອຽດຂອງການດຳລົງຊີວິດ**

- ທົ່ວເມືອງເຊບັ້ງໄຟປະກອບມີ 2 ຊົນເຜົ່າ,ຊົນເຜົ່າລາວເທິງກວມເອົາ 28,8 % ຂອງຈຳນວນບ້ານທັງໝົດ ແລະ ຊົນເຜົ່າລາວລຸ່ມ 37,9 % ພາຍໃນເມືອງມີການເຊື່ອຖືສາດສະໜາພຸດເປັນສ່ວນໃຫຍ່. ແລະ ອີກປະມານ 3,46 % ແມ່ນນັບຖືສາດສະໜາຄາໂຕລິກ.
- ປະຊາຊົນສ່ວນໃຫຍ່ມີອາຊີບເຮັດການຜະລິດກະສິກຳປູກຝັງ - ລ້ຽງສັດ ຊຶ່ງກວມເອົາ 90 % ຂອງປະຊາກອນທັງໝົດ ມາຮອດປະຈຸບັນລວມຍອດຜະລິດຕະພັນສະເລ່ຍຕໍ່ຫົວຄົນຕໍ່ປີ ( GDP ) ມີ 350 $ ໃນນີ້ລາຍຮັບຈາກຂະແໜ່ງກະສິກຳກວມເອົາ 0,19 % ຂອງ GDPF ນອກນັ້ນແມ່ນມາຈາກຂະແໜງອຸດສະຫະກຳ,ຫັດຖະກຳ,ການຄ້າ,ແລະ ບໍລິການອື່ນໆ.

( ຂໍ້ມູນໄດ້ມາຈາກອົງການປົກຄອງທ້ອງຖິ່ນ (ຫ້ອງວ່າການ ) )

**2.3 ໂຄງລ່າງພື້ນຖານ.**

**2.3.1 ໂຄງລ່າງການຄົມມະນາຄົມ.**

- ເມືອງເຊບັ້ງໄຟເປັນເມືອງໜຶ່ງທີ່ມີລະບົບເສັ້ນທາງສາມາດໄປມາຫາສູ່ກັນໄດ້ ສອງລະດູ ແລະ ທະລຸໂລ່ງເກືອບໝົດທຸກບ້ານ, ທົ່ວເມືອງມີເສັ້ນທາງທັງໝົດ 37 ເສັ້ນ ມີຄວາມຍາວ 177.220 ກິໂລແມັດ ເສັ້ນທາງທີ່ສາມາດໄປມາໄດ້ 02 ລະດູມີ 29 ເສັ້ນ, ຍາວ 113.220 ກິໂລແມັດ, ຊຶ່ງລາຍລະອຽດໃນຕາຕະລາງລຸ່ມນີ້ :

| ລ/ດ | ຊື່ເສັ້ນທາງ | ຈຳນວນເສັ້ນ | ຄວາມຍາວ | ໝາຍເຫດ |
|---|---|---|---|---|
| 01<br>02<br>03<br>04<br>05 | ທາງແຂວງຄຸ້ມຄອງ 13 S<br>ທາງຂອງເມືອງຄຸ້ມຄອງ<br>ທາງເທສະບານ<br>ທາງດິນແດງ<br>ທາງຊຸມຊົນ | 01<br>03<br>11<br>07<br>15 | 22.49 Km<br>28.58 Km<br>18.83 Km<br>23.42Km<br>83.9 Km | <br><br><br><br>8 ເສັ້ນທາງລະດູດຽວ |
| | | 37 | 177.220 | |

ນອກຈາກເສັ້ນທາງແລ້ວກໍຍັງ ມີຂົວອີກ ຈຳນວນ 35 ແຫ່ງ ໃນນີ້

\+ ຂົວເບຕົງຂອງແຂວງຄຸ້ມຄອງ 06 ແຫ່ງຄື :

1. ຂົວເຊບັ້ງໄຟ
2. ຂົວຫ້ວຍພ້າວ
3. ຂົວຫ້ວຍຕົງ
4. ຂົວຫວ້ຍຕາດ
5. ຂົວຫ້ວຍລ້າງມື
6. ຂົວຫ້ວຍຍາງ ( ກິກຕ້ອງ )

\+ ຂົວໄມ້ຂອງເມືອງຄຸ້ມຄອງ :

1. ຂົວຫ້ວຍປາກກ່າ
2. ຂົວຫ້ວຍພອກ
3. ຂົວຫ້ວຍສາຍພາຍ 1
4. ຂົວຫ້ວຍສາຍພາຍ 2
5. ຂົວຫ້ວຍສາຍພາຍ 3
6. ຂົວຫ້ວຍສີສອດ
7. ຂົວຫ້ວຍຕາດ
8. ຂົວຫ້ວຍຊາຍ
9. ຂົວຫ້ວຍໜອງຈອກ
10. ຂົວຫ້ວຍຊຽງລົງ
11. ຂົວຫ້ວຍຊຽງເຊົາ
12. ຂົວຫ້ວຍນ້ຳໃສ
13. ຂົວຫ້ວຍອານ 1
14. ຂົວຫ້ວຍອານ 2
15. ຂົວຫ້ວຍອານ 3
16. ຂົວຫ້ວຍດູນ 1

17. ຂີວຫ້ວຍດູນ 2
18. ຂີວຫ້ວຍດູນ 3
19. ຂີວຫ້ວຍຊ້າງຂາດ
20. ຂີວຫ້ວຍນາງເລາະ
21. ຂີວຫ້ວຍເດື່ອ
22. ຂີວຫ້ວຍຂີ້ມີ່ນ
23. ຂີວຫ້ວຍສອກບໍ
24. ຂີວຫ້ວຍກະແສນ ສອກບໍ
25. ຂີວຫ້ວຍ ກະສີ
26. ຂີວຫ້ວຍເລິກ
27. ຂີວຮ່ອງກຸງ
28. ຂີວຫ້ວຍໄຜ່
29. ຂີວຫ້ວຍສະໄກ້

( ຂໍ້ມູນໄດ້ມາຈາກຫ້ອງການ ຍ ທ ຂ ເມືອງ )

**2.3.2 ໂຄງລ່າງທາງດ້ານຊົນລະປະທານ.**

- ເມືອງເຊບັ້ງໄຟເປັນເມືອງທີ່ມີລະບົບຄອເໜືອງຊົນລະປະທານເຖິງ 4 ໂຄງການ ມີ 1 ໂຄງການເປັນໂຄງການໃຫຍ່ລະດັບຊາດ ສາມາດທົດພື້ນທີ່ມາໄດ້ທັງໝົດ 1.525 ຮ/ຕ.

( ຂໍ້ມູນໄດ້ມາຈາກຫ້ອງການສົ່ງເສີມກະສິກຳ-ປ່າໄມ້ເມືອງ )

2.3.3 ໂຄງລ່າງພື້ນຖານທາງດ້ານວັດທະນະທຳ-ສັງຄົມ

- ເມືອງເຊບັ້ໄຟປະກອບມີສິ່ງສາທາລະປະໂຫຍດ, ຊຶ່ງແຈກຢາຍຢູ່ຕາມ ແຕ່ລະຂະແໜງການໃນຂົງເຂດວັດທະນະທຳ-ສັງຄົມ ລາຍລະອຽດໄດ້ສັງລວມ ໃນຕາຕະລາງລຸ່ມນີ້ :

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | ໝາຍເຫດ |
|---|---|---|---|---|
| 01 | ໂຮງຮຽນປະຖົມ | ແຫ່ງ | 44 | |
| 02 | ໂຮງຮຽນມັດທະຍົມຕົ້ນ | ແຫ່ງ | 5 | |
| 03 | ໂຮງຮຽນມັດທະຍົມປາຍ | ແຫ່ງ | 2 | |
| 04 | ວັດ ແລະ ໂບດ | ແຫ່ງ | 34 | ໂບດ 1 ແຫ່ງ |
| 05 | ໂຮງໝໍເມືອງ | ແຫ່ງ | 1 | |
| 06 | ສຸກສາລາ | ແຫ່ງ | 6 | |
| 07 | ຫ້ອງກວດພະຍາດເອກະຊົນ | ແຫ່ງ | 0 | |
| 08 | ຈຳນວນບໍ່ນ້ຳບາດານ | ແຫ່ງ | 1118 | |
| 09 | ຈຳນວນສ້າງແຂ່ງຂີມັງ | ແຫ່ງ | 549 | |
| 10 | ໂຮງງານນ້ຳດື່ມບໍລິສຸດ | ແຫ່ງ | 1 | |

( ຂໍ້ມູນໄດ້ມາຈາກຫ້ອງການສຶກສາ,ສາທາ ແລະ ແນວລາວສ້າງຊາດເມືອງ )

## 3. ການວິເຄາະຄວາມອາດສາມາດທີ່ຖືກກະທົບໄດ້ງ່າຍ ແລະ ໄພອັນຕະລາຍ.

### 3.1 ໄພນ້ຳຖ້ວມ.

**3.1.1 ສາຍເຫດ ແລະ ລະດູການນ້ຳຖ້ວມ.**

**ກ. ສາຍເຫດຂອງນ້ຳຖ້ວມ.**

- ໄພພິບັດນ້ຳຖ້ວມເກີດຂື້ນພາຍໃນເມືອງເຊບັ້ງໄຟ ສ່ວນໃຫຍ່ ແມ່ນມາຈາກການໄຫຼລົ້ນຝັ່ງເຊບັ້ງໄຟ, ທີ່ຕັ້ງພູມສັນຖານພື້ນທີ່ຕ່າງໆຕ່ຳ, ບ້ານເຮືອນພໍ່ແມ່ປະຊາຊົນຕັ້ງຢູ່ເລາະລຽບແຄມເຊ, ບໍ່ມີຄູກັນນ້ຳ,ປະຕູນ້ຳ, ປະຊາຊົນມີຄວາມສິ້ນເຄີຍຢູ່ກັບຄວາມສ່ຽງ, ມີທີ່ພັກອາໃສໜາແໜ້ນມີສະຖານຮອງຮັບລົບໄພ, ມີພາຫະນະ ( ເຮືອ,ລົດ ) ຮັບໄຊ້ເປັນຂອງຕົນເອງ.

**ຂ. ລະດູການໄລຍະນ້ຳຖ້ວມ.**

- ລະດູການນ້ຳຖ້ວມສ່ວນຫຼາຍແມ່ນລະຫວ່າງ ເດືອນສິງຫາ- ເດືອນກັນຍາ ຂອງທຸກໆປີ ໄລຍະເວລາຂອງນ້ຳຖ້ວມຊັ່ງແມ່ນຢູ່ລະຫວ່າງ 15-30 ວັນ, ຄວາມໄວຂອງນ້ຳຖ້ວມແຕ່ 5-10 ວັນ .

### 3.1.2 ປະລິມານຄວາມຮຸນແຮງ ແລະ ເນື້ອທີ່ ທີ່ຖືກຖ້ວມ.

- ປະລິມານ ແລະ ຄວາມຮຸນແຮງຂອງໄພນ້ຳຖ້ວມ ແມ່ນຂື້ນກັບຜົນກະທົບຕໍ່ສິ່ງຕ່າງໆໃນຂອບເຂດທີ່ຖືກນ້ຳຖ້ວມ ຊຶ່ງລວມທັງຊັບສິນຂອງປະຊາຊົນ ( ເຮືອນຊານບ້ານຊ່ອງ, ໄຮ່ນາຮົ້ວສວນ, ສັດລ້ຽງ ) ແລະ ຊັບສິນສາທາລະນະປະໂຫຍດຕ່າງໆ ( ໂຮງຮຽນ, ໂຮງໝໍ, ຖະໜົນຫົນທາງລະບົບຊົນລະປະທານ ວັດວາອາຮາມ ) ຊຶ່ງຜົນກະທົບດັ່ງກ່າວໃນຮອບ 10 ປີ ( 1999-2008 ) ພໍສັງລວມໃນແຕ່ລະດ້ານດັ່ງຕາຕະລາງລຸ່ມນີ້ :

**ກ. ຜົນກະທົບທາງດ້ານສັງຄົມ-ການປົກຄອງ**

| ລ/ດ | ເນື້ອໃນ ລາຍການ | ປີ 1999 | ປີ 2000 | ປີ 2001 | ປີ 2002 | ປີ 2003 | ປີ 2004 | ປີ 2005 | ປີ 2006 | ປີ 2007 | ປີ 2008 |
|---|---|---|---|---|---|---|---|---|---|---|---|
| 01 | **ຈຳນວນບ້ານທີ່ຖືກກະທົບ** | **32** | **31** | **32** | **32** | **25** | **34** | **36** | **29** | **29** | **29** |
| 02 | **ຈຳນວນຫຼັງຄາທີ່ຖືກກະທົບ** | **1** | 1 | 1 | 0 | 0 | 1 | 3 | 0 | 0 | 0 |
| 03 | **ຈຳນວນຄອບຄົວທີ່ຖືກກະທົບ** | **2.797** | 2.727 | 2.752 | 2.711 | 2.694 | 2.853 | 2.894 | 2.742 | 2.749 | 2 .738 |
| 04 | **ຈຳນວນປະຊາຊົນທີ່ຖືກກະທົບ** | 12.650 | 12.600 | 12.452 | 12.162 | 12.077 | 12.934 | 13.180 | 12.352 | 12.404 | 12.324 |

( ຂໍ້ມູນໄດ້ມາຈາກ ອົງການປົກຄອງທ້ອງຖິ່ນ ( ຫ້ອງວ່າການ ))

## ຂ. ຜົນກະທົບທາງດ້ານກະສິກຳ

- ຜົນກະທົບຕໍ່ການຜະລິດເຂົ້ານາປີ

| ລ/ດ | ເນື້ອໃນລາຍການ | ປີ 1999 | ປີ 2000 | ປີ 2001 | ປີ 2002 | ປີ 2003 | ປີ 2004 | ປີ 2005 | ປີ 2006 | ປີ 2007 | ປີ 2008 |
|---|---|---|---|---|---|---|---|---|---|---|---|
| 01 | **ເນື້ອທີ່ນາລວມ(ຮຕ)** | 4243.4 | 4406.06 | 5828.46 | 6129.70 | 6273.0 | 6623.0 | 5580.0 | 5700.0 | 5985.0 | 6124.57 |
| 02 | ເນື້ອທີ່ນາຖືກນ້ຳຖ້ວມ | 2820.22 | 323.17 | 2969.44 | 2723.23 | 2468.06 | 2999.28 | 3088.80 | 2536.7 | 1952.0 | 1593.47 |
| 03 | ເນື້ອທີ່ນາເສຍຫາຍ(ຖ້ວມ) | 1310.50 | 1403.63 | 1379.36 | 1265.0 | 1146.47 | 1393.23 | 1434.82 | 1100.35 | 947.16 | 233.83 |
| 04 | ຜົນເສຍຫາຍລວມ | 3275.1 | 3649.4 | 3862.2 | 3731.8 | 3668.7 | 4737.0 | 5021.9 | 4081.9 | 2803.6 | 654.70 |
| 05 | ມູນຄ່າເສຍຫາຍ(ລ້ານກີບ) | 124.453 | 138.677 | 146.763 | 171.808 | 139.410 | 180.006 | 190.832 | 155.112 | 106.536 | 24.878 |

- ຜົນກະທົບຕໍ່ລະບົບຊົນລະປະທານ

| ລ/ດ | ເນື້ອໃນລາຍການ | ປີ 1999 | ປີ 2000 | ປີ 2001 | ປີ 2002 | ປີ 2003 | ປີ 2004 | ປີ 2005 | ປີ 2006 | ປີ 2007 | ປີ 2008 |
|---|---|---|---|---|---|---|---|---|---|---|---|
| 01 | ມູນຄ່າເສຍຫາຍ(ລ້ານກີບ) | 450.0 | 680.0 | 510.0 | 500.0 | 445.0 | 650.0 | 700.0 | 550.0 | 490.0 | 330.0 |

- ຜົນກະທົບຕໍ່ການລ້ຽງສັດ ແລະ ການປະມົງ

| ລ/ດ | ເນື້ອໃນລາຍການ | ປີ 1999 | ປີ 2000 | ປີ 2001 | ປີ 2002 | ປີ 2003 | ປີ 2004 | ປີ 2005 | ປີ 2006 | ປີ 2007 | ປີ 2008 |
|---|---|---|---|---|---|---|---|---|---|---|---|
| 01 | ມູນຄ່າເສຍຫາຍ(ລ້ານກີບ) | 480.0 | 408.0 | 440.0 | 50.0 | 45.0 | 50.0 | 62.0 | 300.0 | 52.5 | 19.5 |

( ຂໍ້ມູນໄດ້ມາຈາກຫ້ອງການສົ່ງເສີມກະສິກຳ-ປ່າໄມ້ )

## ຄ. ຜົນກະທົບທາງດ້ານໂຄງລ່າງພື້ນຖານຄົມມະນາຄົມ

( ມູນຄ່າເສຍຫາຍຂອງທົນທາງ, ຂົວ ແລະ ທໍ່ຕ່າງໆ ຫົວໜ່ວຍ x 1 ລ້ານກີບ )

| ລ/ດ | ເນື້ອໃນ ລາຍການ | ປີ 1999 | ປີ 2000 | ປີ 2001 | ປີ 2002 | ປີ 2003 | ປີ 2004 | ປີ 2005 | ປີ 2006 | ປີ 2007 | ປີ 2008 |
|---|---|---|---|---|---|---|---|---|---|---|---|
| 01 | ທົນທາງຫຼວງແຫ່ງຊາດແຂວງຄຸ້ມຄອງ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 02 | ທົນທາງເມືອງຄຸ້ມຄອງ | 22.58 | 22.35 | 21.48 | 18.75 | 1.05 | 20.85 | 28.79 | 1978 | 18.65 | 18.37 |
| 03 | ທາງເທດສະບານ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| 04 | ທາງດິນແດງ | 150.5 | 195.62 | 212.5 | 85.9 | 98.86 | 201.4 | 215.2 | 98.86 | 203.51 | 88.88 |
| 05 | ທາງຊຸມຊົນ | 23.75 | 23.6 | 22.77 | 24.38 | 1.45 | 27.87 | 43.85 | 20.25 | 23.78 | 19.95 |
| | ລວມ | 196.83 | 241.57 | 256.72 | 129.03 | 101.36 | 250.12 | 287.84 | 138.89 | 245.94 | 127.02 |

( ( ຂໍ້ມູນໄດ້ມາຈາກຫ້ອງການ ຍ ທ ຂ ເມືອງ )

## ງ. ຜົນກະທົບທາງດ້ານວັດທະນະທຳ ( x 1 ລ້ານກີບ )

| ລ/ດ | ເນື້ອໃນ ລາຍການ | ປີ 1999 | ປີ 2000 | ປີ 2001 | ປີ 2002 | ປີ 2003 | ປີ 2004 | ປີ 2005 | ປີ 2006 | ປີ 2007 | ປີ 2008 |
|---|---|---|---|---|---|---|---|---|---|---|---|
| 01 | ດ້ານການສຶກສາ(ໂຮງຮຽນ ) | 5.7 | 13.45 | 1.47 | 18.0 | 3.5 | 17.8 | 53.0 | 12.24 | 3.8 | 3.42 |
| 02 | ດ້ານສາທາລະນະສຸກ | 536.25 | 543.81 | 563.87 | 450.22 | 50.14 | 586.08 | 768.46 | 638.79 | 558.64 | 490.86 |
| | ລວມ | 541.95 | 557.26 | 565.34 | 468.22 | 53.64 | 603.88 | 821.46 | 651.03 | 562.44 | 494.28 |

( ຂໍ້ມູນໄດ້ມາຈາກ ຫ້ອງການສຶກສາ,ສາທາເມືອງ )

***ໝາຍເຫດ*** : ນອກຈາກມີຜົນກະທົບ ແລະ ສິ່ງຜົນເສຍຫາຍເປັນຈຳນວນຫຼາຍຕໍ່ຂົງເຂດການສຶກສາ, ສາທາລະນະສຸກແລ້ວຍັງມີຜົນກະທົບເຖິງສິ່ງສາທາລະນະອື່ນໆອີກເປັນຕົ້ນແມ່ນການກະທົບໃສ່ວັດວາອາຮາມ ແລະ ໄດ້ສ້າງຄວາມເສຍຫາຍຈຳນວນຫຼາຍ.

### 3.1.3 ສັງລວມມູນຄ່າເສຍຫາຍໃນແຕ່ລະຂົງເຂດ

- ໄລຍະ 10 ປີ ( 1999-2008 ) ຜົນເສຍຈາກນ້ຳຖ້ວມມີມູນຄ່າທັງໝົດ

1. ດ້ານການກະສິກຳ 8.510.475 ( ລ້ານກີບ )
   - ການປູກຝັງ ( ນາປີ ) 1.348.475
   - ຊົນລະປະທານ 5.305.000
   - ການລ້ຽງສັດ 1.857.000

2. ດ້ານພື້ນຖານໂຄງລ່າງການຄົມມະນາຄົມ 1.975.32

3. ດ້ານວັດທະນະທຳ-ສັງຄົມ 5.319.5

- ດ້ານການສຶກສາ 152.38

- ດ້ານສາທາລະນະສຸກ 5.187.12

*ມູນຄ່າລວມທັງໝົດ 15.805.295 ກີບ*

3.2 **ໄພອັນຕະລາຍຈາກໄພແຫ້ງແລ້ງ.**

- ນອກຈາກໄພພິບັດນ້ຳຖ້ວມແລ້ວຍັງມີໄພແຫ້ງແລ້ງຕາມມາເປັນເຫດການໜຶ່ງ ທີ່ຂື້ນຊູ່ຕໍ່ຊີວິດຊັບສິນຂອງປະຊາຊົນພາຍໃນເມືອງການສ່ຽງນ້ຳຖ້ວມນັ້ນພັດມີອັນແກ້ໄຂຍ້ອນມີລະບົບຊົນລະປະທານ ສ່ວນຂົງເຂດທີ່ບໍ່ມີຊົນລະປະທານຈະມີຄວາມອັນຕະລາຍ ສ່ຽງຕໍ່ຄວາມເສຍຫາຍ ຈາກຜົນກະທົບດັ່ງກ່າວເຊັ່ນ : ພືນລະປູກ ( ຕົ້ນກ້າ,ຕົ້ນເຂົ້າຕາຍ ) ດັ່ງນັ້ນເປັນຕົ້ນ, ໄລຍະທີ່ປະຊາຊົນ ປະສົບໄພແຫ້ງແລ້ງ ກໍຈະມີຢູ່ສອງໄລຍະຄື : ໄລຍະເດືອນມິຖຸນາ ຫາ ເດືອນກໍລະກົດ ແລະ ໄລຍະທ້າຍເດືອນສິງຫາ ພາຍຫຼັງໄພນ້ຳຖ້ວມ ຫຼື ອາດຈະເວົ້າໄດ້ວ່າ ໄລຍະກ່ອນນ້ຳຖ້ວມ ແລະ ໄລຍະຫຼັງນ້ຳຖ້ວມ.

**3.3 ໄພອັນຕະລາຍຈາກພາຍຸ.**

- ນອກຈາກມີຄວາມອັນຕະລາຍຈາກນ້ຳຖ້ວມ ແລະ ແຫ່ງແລ້ງແລ້ວຍັງມີພາຍຸລົມແຮງ ທີ່ມີຄວາມໄວສູງພັດຖະຫຼົ່ມແຫຼ່ງຊັບພະຍາກອນທຳມະຊາດຫັກກົ່ນເປັນຈຳນວນຫຼວງຫຼາຍ ພ້ອມທັງໂຮງຮຽນໂຮງໝໍວັດວາອາຣາມ ແລະ ບ້ານເຮືອນປະຊາຊົນ ຈຳນວນໜຶ່ງເປ່ເພສາເຫດປະກົດການດັ່ງກ່າວ ແມ່ນເກີດຂື້ນລະຫວ່າງເດືອນ ມິຖຸນາ-ເດືອນກໍລະກົດ.

**3.4. ຂົງເຂດຕ່າງທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ.**

**3.4.1. ຂົງເຂດສັງຄົມ ແລະ ການປົກຄອງ**

- ຈະລວມເອົາບັນດາບ້ານເຮືອນຊານ ແລະ ປະຊາຊົນທີ່ຢູ່ໃນຂົງເຂດສ່ຽງຕໍ່ການເກີດໄພພິບັດນ້ຳຖ້ວມ ຄື ດັ່ງໄດ້ສະແດງໃຫ້ເຫັນຢູ່ໃນຕາຕະລາງຂ້າງເທິງນັ້ນ, ແຕ່ບ້ານເປັນຈຸດຫຼໍ່ແຫຼມ ແລະ ມີຄວາມສ່ຽງໄດ້ຈັດລຽງດັ່ງຕາຕະລາງລຸ່ມນີ້ :

***ກ. ບ້ານທີ່ມີຄວາມສ່ຽງປະເພດ 1***

| ລ/ດ | ຊື່ບ້ານ | ຈຳນວນ ຫຼັງຄາ | ຈຳນວນ ຄອບຄົວ | ຈຳນວນພົນລະເມືອງ | | ໝາຍເຫດ |
|---|---|---|---|---|---|---|
| | | | | ລວມ | ຍິງ | |
| 01 | ຫາດຄຳຮຽງ | 243 | 309 | 1541 | 789 | |
| 02 | ຍາງຄຳ | 203 | 296 | 1240 | 621 | |
| 03 | ນາພອກ | 190 | 290 | 1273 | 640 | |
| 04 | ດ້າງທ່າ | 88 | 114 | 558 | 396 | |
| 05 | ຫາດເພັກ | 34 | 40 | 194 | 104 | |

| | | | | | | |
|---|---|---|---|---|---|---|
| 06 | ກະສີ | 53 | 58 | 312 | 171 | |
| 07 | ແກ້ງແຄນ | 44 | 51 | 246 | 133 | |
| 08 | ທ່າຄໍ້ | 55 | 60 | 300 | 159 | |
| 09 | ແກ້ງແປ | 92 | 96 | 472 | 250 | |
| | ລວມ | 1.002 | 1.314 | 6.136 | 3.236 | |

ໃນ 09 ບ້ານໄດກໍານົດເອົາ 4 ຈຸດເປົ້າໝາຍຂອງເມືອງ ໃນການຈັດຕັ້ງປະຕິບັດ ແຜນການຍົກຍ້າຍ ແລະ ຕັ້ງສູນລົບໄພຊົ່ວຄາວຢູ່ໃນພື້ນທີ່ໆປອດໄພ.

**ຂ. ບ້ານທີ່ມີຄວາມສ່ຽງປະເພດ 2**

| ລ/ດ | ຊື່ບ້ານ | ຈໍານວນ ຫຼັງຄາ | ຈໍານວນ ຄອບຄົວ | ຈໍານວນພົນລະເມືອງ | | ໝາຍເຫດ |
|---|---|---|---|---|---|---|
| | | | | ລວມ | ຍິງ | |
| 01 | ໜອງບອນ | 162 | 193 | 923 | 453 | |
| 02 | ປາກເຊນ້ອຍ | 76 | 102 | 546 | 273 | |
| 03 | ເວີນສະນັ່ນ | 72 | 48 | 443 | 214 | |
| 04 | ທ່າຫາດ | 61 | 65 | 291 | 146 | |
| 05 | ບ້ານສິ້ມ | 164 | 174 | 909 | 482 | |
| 06 | ບ້ານສ້ອມ | 90 | 107 | 501 | 265 | |
| | ລວມ | 625 | 689 | 3.613 | 1.833 | |

( ຂໍ້ມູນໄດ້ມາຈາກຫ້ອງການຄົ້ນຄ້ວາສັງລວມ ຫ້ອງວ່າການ )

## 3.4.2 ຂົງເຂດກະສິກໍາ.

- ເນື້ອທີ່ນາຈໍານວນ ປະມານ 3000 ກ່ວາ ເຮັກຕາ ແລະ ພື້ນທີ່ສວນປະມານ 200 ກ່ວາເຮັກຕາ ຖືກ ນໍ້າຖ້ວມ ແລະ ມີຜົນເສຍຫາຍເປັນຈໍານວນຫຼວງຫຼາຍເຊັ່ນ :
- ສັດລ້ຽງຈໍານວນບໍ່ໜ້ອຍຖືກຜົນກະທົບໂດຍສະເພາະແມ່ນພານໝູ, ງົວ ແລະ ຄວາຍ.
- ໜອງປາຂອງປະຊາຊົນຈໍານວນ 200 ກ່ວາໜອງ ຖືກນໍ້າຖ້ວມ ແລະ ສ້າງຄວາມເສຍເປັນຈໍານວນ ຫຼວງຫຼາຍ.

( ຂໍ້ມູນໄດ້ມາຈາຫ້ອງການສິ່ງເສີມກະສິກໍາ-ປ່າໄມ້ )

## 3.4.3. ຂົງເຂດໂຄງລ່າງພື້ນຖານການຄົມມະນາຄົມ

- ຖະໜົນຫົນທາງຈໍານວນ 10 ກວ່າເສັ້ນ ຖືກນໍ້າໄຫຼເສາະເຈື່ອນເພພັງຂຶວ,ທໍ່ລອດທາງກໍຖືກຜົນກະທົບ ເໝືອນກັນ.

( ຂໍ້ມູນໄດ້ມາຈາກ ຫ້ອງການ ຍ ທ ຂ ເມືອງ )

## 3.4.4 ຂົງເຂດວັດທະນາທໍາສັງຄົມ.

- ໂຮງຮຽນ ໂຮງໝໍ ວັດວາ ອາລາມ ກໍ່ຖືກກະທົບ ແລະ ມີຜົນເສຍຫາຍ ເປັນຈໍານວນຫຼາຍ.

# 3.5 ຄວາມອາດສາມາດ ແລະ ແຫຼ່ງວັດຖຸ.

**3.5.1 ບັນຊີວັດຖຸອຸປະກອນ ຮັບໃຊ້ສຳຫຼັບ ຮ່ອງຮັບການຍົກຍ້າຍຄົວເຮືອນ.**

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ເຕັ້ນ | ຊຸດ | 20 | 00 | 20 | |
| 2 | ເຄື່ອງເຮືອນຄົວ ໝໍ່ ຖ້ວຍ ຊາມ | ຊຸດ | 40 | 00 | 40 | |
| 3 | ຈັກ ໄຟ ນ້ຳມັນ | ຊຸດ | 04 | 00 | 04 | |
| 4 | ສະບຽງອາຫານ | ຊຸດ | 80 | 00 | 80 | |

**3.5.2 ບັນຊີພາຫະນະການຂົນສົ່ງ.**

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ເຮືອໃມ້ ເຄື່ອງຈັກ | ລຳ | 300 | 300 | 00 | |
| 2 | ເຮືອທ້ອງແບນ ເຄື່ອງຈັກ | ລຳ | 08 | 00 | 08 | |
| 3 | ລົດບັນທຸກ | ຄັນ | 20 | 20 | 00 | |
| 4 | ລົດໂດຍສານ | ຄັນ | 10 | 10 | 00 | |
| 5 | ລົດໄຖນາ | ຄັນ | 250 | 250 | 00 | |
| 6 | ລົດກະບະ | ຄັນ | 4 | 3 | 1 | |
| 7 | ອຸປະກອນ ຊູຊີບ ຄົບຊຸດ | ຊຸດ | 12 | 00 | 12 | |

**3.5.3 ບັນຊີອຸປະກອນສື່ສານ.**

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | TeLephone/Fay | ເຄື່ອງ | 1 | 00 | 1 | |
| 2 | ໂທລະສັບຜ່ານດາວທຽມ | ເຄື່ອງ | 26 | 10 | 16 | |
| 3 | ວິທະຍຸຕິດຕໍ່ໄລຍະໄກ້ | ເຄື່ອງ | 21 | 00 | 21 | |
| 4 | ໂທລະໂຂ່ງ | ຊຸດ | 9 | 4 | 5 | |

**3.5.4 ບັນຊີອຸປະກອນຄວບຄຸມນ້ຳຖ້ວມ.**

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ເຄື່ອງໝາຍວັດແທກນ້ຳຖ້ວມ | ຈຸດ | 00 | | 00 | |

| | | | | | | |
|---|---|---|---|---|---|---|
| 2 | ຖົງຊີ້ຊາຍ | ຖົງ | 1.500 | 00 | 1.500 | |
| 3 | ຈັກສູບນ້ຳ | ເຄື່ອງ | 00 | 00 | 00 | |
| 4 | ເຄື່ອງລະບາຍນ້ຳ | ຈຸດ | 02 | 00 | 02 | |

**3.5.5 ບັນຊີສິ່ງອຳນວຍຄວາມສະດວກ ທາງການແພດ.**

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ໂຮງໝໍ່ສຸກສາລາ | ແຫ່ງ | 7 | 6 | 1 | |
| 2 | ທ່ານ ໝໍຊ່ຽວຊານ | ຄົນ | 4 | 00 | 4 | |
| 3 | ລົດໂຮງໝໍ | ຄົນ | 2 | 00 | 2 | |
| 4 | ອຸປະກອນການແພດ | ລ້ານກີບ | 40 | 00 | 40 | |
| 5 | ຢາປົວພະຍາດ | ລ້ານກີບ | 20 | 00 | 20 | |

**3.5.6 ບັນຊີຊັບພະຍາກອນມະນຸດ.**

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ທີມປ້ອງກັນຕ້ານນ້ຳຖ້ວມ | ທີມ | 04 | 00 | 04 | |
| 2 | ທີມກູ້ໄພເຄື່ອງຍ້າຍ | ທີມ | 04 | 00 | 04 | |
| 3 | ກຳລັງທະຫານຕຳຫຼວດ | ກອງຮ້ອຍ | 01 | 01 | 00 | |
| 4 | ທີມແພດເຄື່ອນທີ່ | ທີມ | 04 | 04 | 00 | |
| 5 | ອາສາສະມັກກາແດງ | ກອງ | 01 | 00 | 01 | |
| 6 | ອາສາສະມັກອື່ນໆ | ກອງ | 09 | 00 | 09 | |

## 4. ກົງຈັກການຈັດຕັ້ງສຳຫຼັບບວງກງານ ຄຸ້ມຄອງໄພພິບັດ.

### 4.1 ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ( D D M C ).

- ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງໄດ້ຖືກແຕ່ງຕັ້ງຂື້ນ ໂດຍການຕົກລົງ ຂອງເຈົ້າເມືອງໆ ເຊັ້ບງໄຟ ສະບັບເລກທີ່ 95/ຈມ ລົງວັນທີ່ 02 / 03 / 2009

**ລາຍຊື່ຄະນະກຳມະການ ແລະ ກອງເລຂາ ລາຍລະອຽດດັ່ງຕໍ່ໄປນີ້.**

ກ . ຄະນະກຳມະການ ຄຸ້ມຄອງ ໄພພິບັດ ຂັ້ນເມືອງ.

1. ທ່ານ ບຸນສີ ພົມມະໄຊ ຮອງເຈົ້າເມືອງໆເຊບັ້ງໄຟ ເປັນຈປະທານ
2. ທ່ານ ຈັນທະໜອມ ນຽມມະນີວັນ ຫົວໜ້າຫ້ອງການສົ່ງເສີມກະສິກຳ-ປ່າໄມ້ ເປັນຮອງປະທານ
3. ທ່ານ ຄຳພຸດ ນວນມະນີ ປະທານກວດກາພັກລັດ ເປັນຄະນະ
4. ທ່ານ ບຸນເພັງ ແອ້ສຸລະຍັນ ຫົວໜ້າຈັດຕັ້ງເມືອງ ເປັນຄະນະ
5. ທ່ານ ເກສອນ ພອນມະນີ ຫົວໜ້າໂຄສະນາອົບຮົມ ເປັນຄະນະ
6. ທ່ານ ຄຳໃບ ປະຊາໃຊ ຮ ສ ສ ເມືອງ ເປັນຄະນະ
7. ທ່ານ ເໜືອຍຄຳ ວິລະວົງ ຮອງຫົວໜ້ານຫ້ອງວ່າການເມືອງ ເປັນຄະນະ
8. ທ່ານ ບຸນບັງ ມາດນີວົງ ຮອງຫົວໜ້າຫ້ອງການສາທາເມືອງ ເປັນຄະນະ
9. ທ່ານ ພ/ທ ສີຄວນ ກອງບັນຊາການປ ກ ຊ ເປັນຄະນະ
10. ທ່ານ ຮ/ອ ພູຂີງ ປ ກ ສ ເມືອງ ເປັນຄະນະ
11. ທ່ານ ສົມພົງ ແອ້ສຸລິຍັນ ເລຂາຊາວຍໜຸ່ມເມືອງ ເປັນຄະນະ
12. ທ່ານ ສອນເພັດ ມິດອາລຸນ ເປັນຄະນະ
13. ທ່ານ ລິດວິໄລ ຮອງຫົວໜ້າຫ້ອງການສຶກສາເມືອງ ເປັນຄະນະ
14. ທ່ານ ສຸບິນ ຈັນທະວົງ ຫົວໜ້າຫ້ອງການການເງິນເມືອງ ເປັນຄະນະ
15. ທ່ານ ນາງ ສຸກກາ ຮອງຫົວໜ້າຫ້ອງການອ ສ ຄ ເມືອງ ເປັນຄະນະ
16. ທ່ານ ນາງ ດາວພະສຸກ ປະທານແມ່ຍິງເມືອງ ເປັນຄະນະ
17. ທ່ານ ຄູນຕາ ຮອງຫົວໜ້າຫ້ອງການຍຸດຕິທຳເມືອງ ເປັນຄະນະ
18. ທ່ານ ບົວຄີ ຫົວໜ້າຫ້ອງການແຜນການ-ການລົງທຶນ ເປັນຄະນະ
19. ທ່ານ ບຸນຖົມ ຫົວໜ້າຫ້ອງການໄຟຟ້າ ເປັນຄະນະ
20. ທ່ານ ເພັດສະເດັດ ຫົວໜ້າອົງການທີ່ດິນ ແລະ ນ້ຳ ເປັນຄະນະ
21. ທ່ານ ສົມສັກ ຫົວໜ້າຖະແຫຼງຂ່າວ ແລະ ວັດທະນະທຳ ເປັນຄະນະ
22. ທ່ານ ບຸນແຍງ ຮອງຫົວໜ້າ ຍ ທ ຂ ເມືອງ ເປັນຄະນະ

ຂໍ ກອງເລຂາ

1. ທ່ານ ເໜືອຍຄຳ ຮອງຫົວໜ້າຫ້ອງວ່າການເມືອງ ເປັນຫົວໜ້າ
2. ທ່ານ ບຸນໂຍ ຫົວໜ້າກອງກໍ່ສ້າງຮາກຖານ ເປັນຮອງ
3. ທ່ານ ສີສົມພອນ ວິຊາຫານຫ້ອງການສົ່ງເສີມ ເປັນຄະນະ
4. ທ່ານ ວະສັນພະນັກງານ ອ ສ ຄ ເມືອງ ເປັນຄະນະ
5. ທ່ານ ນາງ ໜໍ່ແກ້ວ ພະນັກງານ ຍ ທ ຂ ເປັນຄະນະ
6. ທ່ານ ນາງ ຄຳຫຼ້າ ແຜນການການລົງທຶນ ເປັນຄະນະ
7. ທ່ານ ສາຍຄຳ ສຸພາພອນ ໂຄສະນາອົບຮົມ ເປັນຄະນະ
8. ທ່ານ ນາງ ວາດສະໜາ ຮ ສ ສ ເມືອງ ເປັນຄະນະ

9. ທ່ານ  ນາງ ວຽງສະໃໝ ຈັດຕັ້ງເມືອງ   ເປັນຄະນະ

10. ທ່ານ ນາງ ເຂັມພອນ ຊາວໜຸ່ມເມືອງ  ເປັນຄະນະ

11. ທ່ານ  ຮ/ອ  ທັດສະດີ  ຫົວໜ້າຫ້ອງການ ປ ກ ຊ ເປັນຄະນະ

12. ທ່ານ  ຮ/ອ  ບຸນທົງ ຫົວໜ້າ ປ ກ ສ  ເປັນຄະນະ

13. ທ່ານ ນາງ ນວນຕາ ຮອງຫົວໜ້າສະຫະພັນແມ່ຍິງເມືອງ  ເປັນຄະນະ

14. ທ່ານ ອຳພອນ  ຫ້ອງການສຶກສາເມືອງ ເປັນຄະນະ

15. ທ່ານ ຂັນທອງ  ຫ້ອງການສາທາເມືອງ ເປັນຄະນະ

16. ທ່ານ ສີສຸພັນ   ຫ້ອງການວັດທະນະທຳ  ເປັນຄະນະ

17. ທ່ານ  ສົມໄຊ (ຈ່ອຍ)  ຫ້ອງການການເງິນເມືອງ  ເປັນຄະນະ

18. ທ່ານ  ນາງ ບຸນທະວີ  ຫ້ອງການທີ່ດິນນ້ຳ ແລະ ສິ່ງແວດລ້ອມ   ເປັນຄະນະ

## 4.2 <u>ພາລະບົດບາດຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ( DDMC )</u>

### 4.2.1 <u>ພາລະບົດບາດຂອງຄະນະກຳມະການຂັ້ນເມືອງ.</u>

| ກ່ອນໄພ ພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກຳນົດແຜນງານໂຄງການດຳເນີນງານສຳລັບປ້ອງກັນຕອບຕ້ານແລະຟື້ນຟູທົດແທນຜົນກະທົບ.<br>- ຈັດຕັ້ງກອງປະຊຸມສາມັນປະຈຳປີເພື່ອຕີລາຄາຄືນຜົນການເຄື່ອນໄຫວແລະຜ່ານແຜນປະຈຳປີ.<br>- ມອບໜ້າທີ່ຄວາມຮັບຜິດຊອບໃຫ້ຄະນະກຳມະການແຕ່ລະພາກສ່ວນແຕ່ລະຂະແໜງການ. | - ລົງຕິດຕາມກວດກາ ແລະ ຊຸດຍູ້ຄະນະກຳມະການແລະທີມງານທີ່ປະຕິບັດແຜນງານ ຈັດຈະກຳຢູ່ພາກສະໜາມ.<br>-ລົງຕິດຕາມບ້ານທີ່ຖືກກະທົບຫຼືສູນຫຼົບໄພເພື່ອປຸກລະດົມແນວຄິດຈິດໃຈປະຊາຊົນ ຜູ້ຖືກກະທົບ.<br>- ລາຍງານຂັ້ນເທິງແຕ່ລະຂັ້ນ ອີງຕາມສະພາບການໃນແຕ່ລະໃລຍະ. | -ລົງຕິດຕາມກວດກາປະເມີນຜົນກະທົບຈາກໄພນ້ຳຖ້ວມ.<br>-ລົງບ້ານທີ່ຖືກກະທົບເພື່ອໃຫ້ການພື້ນຟູທົດແທນ ຜົນກະທົບ ແລະພື້ນຟູແນວຄິດຈິດໃຈຂອງປະຊາຊົນ .<br>- ຈັດກອງປະຊຸມສະຫຼຸບຕີລາຄາຜົນການເຄື່ອນໄຫວຂອງຄະນະກຳມະການ ແລະ ທີມງານ.<br>-ລາຍງານຜົນກະທົບຈາກໄພນ້ຳຖ້ວມໃຫ້ແກ່ຂັ້ນເທິງຂອງຕົນ.<br>- ປັບປຸງແຜນ F P P ຫຼັງນ້ຳຖ້ວມ |

### 4.2.2 <u>ພາລະບົດບາດຂອງຄະນະກອງເລຂາ.</u>

| ກ່ອນໄພ ພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|

| | | |
|---|---|---|
| - ສັງລວມຂໍ້ມູນຜົນກະທົບນ້ຳຖ້ວມຂອງປີຜ່ານມາ,ວິເຄາະວິໄຈ, ຮ່າງນິຕິກຳຕ່າງໆໃຫ້ແກ່ຄະນະກຳມະການ ( ບົດສະຫຼຸບແຜນການ, ຄຳສັ່ງຂໍ້ກຳນົດກົດລະບຽບຕ່າງໆ ຂອງເຈົ້າເມືອງ)<br>- ກຽມປັດໄຈຈຳເປັນສຳລັບການຈັດຕັ້ງກອງປະຊຸມ ສາມັນປະຈຳປີ ຂອງຄະນະກຳມະການ .<br>- ປະສານງານລະຫວ່າງຄະແໜງການຕ່າງໆພາຍໃນເມືອງ-ແຂວງ .<br>- ກຽມປັດໃຈທີ່ຈຳເປັນສຳລັບການເຄື່ອນໄຫວຂອງທີມງານ ແລະ ຄະນະກຳມະການກ່ອນນ້ຳຖ້ວມ | -ຮ່ວມລົງຕິດຕາມກວດກາແລະຊຸດຢູ່ກັບຄະນະກຳມະການ,ເກັບກຳສະພາບຜົນກະທົບ ເຝົ້າລະວັງໄພນ້ຳຖ້ວມຢ່າງໃກ້ຊິດ ແລະ ແນະນຳວິທີການຕອບໂຕ້ ໃຫ້ທັນການ .<br>- ຮ່ວມກັນບຄະນະກຳມະການລົງຕິດຕາມບ້ານຫຼືສູນລົບໄພເພື່ອໃຫ້ການສ່ວຍເຫຼືອຕາມຄວາມເໝາະສົມ .<br>-ສ້າງບົດລາຍງານໃຫ້ຄະນະກຳມະການແລະລາຍງານຂັ້ນເທິງຂອງຕົນແຕ່ລະຂັ້ນອີງຕາມສະພາບແຕ່ລະໄລຍະ . | - ຮ່ວມກັບຄະນະກຳມະການລົງຕິດຕາມກວດກາ ແລະ ປະເມີນຜົນກະທົບຈາກນ້ຳຖ້ວມ.<br>- ຮ່າງບົດປະເມີນຜົນກະທົບບົດສະຫຼຸບຜົນການເຄື່ອນໄຫວແຜນການຟື້ນຟູ ທົດແທນ ແລະ ແຜນການເຄື່ອນໄຫວ ໃນປີຕໍ່ໄປ.<br>- ຮ່ວມກັບຄະນະກຳມະການລົງຕິດຕາມ ບ້ານທີ່ຖືກກະທົບເພື່ອໃຫ້ການຟື້ນຟູທົດແທ່ນຜົນກະທົບ ແລະ ຟື້ນຟູແນວຄິດຈິດໃຈຂອງປະຊາຊົນ .<br>-ກະກຽມກອງປະຊຸມສະຫຼຸບຕີລາຄາຜົນການເຄື່ອນໄຫວຂອງຄະນະກຳມະການແລະທີມງານ.<br>- ລາຍງານຜົນກະທົບຈາກນ້ຳຖ້ວມໃຫ້ແກ່ຂັ້ນເທິງຂອງຕົນ. |

4.2.2 **<u>ລາຍຊື່ ຂອງບັນດາຫ້ອງການທີ່ມີຄວາມສຳຄັນໃນການເຄື່ອນໄຫວຕອບຕ້ານໄພພິບັດເມືອງເຊບັ້ງໄຟລະອຽດດັ່ງນີ້ :</u>**

1. ຫ້ອງການສົ່ງເສີມກະສິກຳ-ປ່າໄມ້ເມືອງ
2. ຫ້ອງຫານແຮງງານສະຫວັດດີການ-ສັງຄົມເມືອງ
3. ຫ້ອງການສາທາລະນະສຸກເມືອງ
4. ອົງການຈັດຕັ້ງມະຫາຊົນ ແລະ ແນວລາວສ້າງຊາດ
5. ກອງບັນຊາການທະຫານເມືອງ
6. ກອງບັນຊາການ ປ ກ ສ ເມືອງ
7. ຫ້ອງການໂຍທາ ແລະ ຂົນສົ່ງເມືອງ
8. ຫ້ອງການແຜນການການລົງທຶນ
9. ຫ້ອງການການເງິນເມືອງ
10. ຫ້ອງການອຸດສະຫະກຳ ແລະ ການຄ້າ
11. ຫ້ອງການໂຄສະນາອົບຮົມ
12. ຫ້ອງການທະແຫຼງຂ່າວວັດທະນະທຳເມືອງ

13. ຫ້ອງການສຶກສາ ແລະ ກິລາເມືອງ.

14. ອົງການທີ່ດິນ ແລະ ສິ່ງແວດລ້ອມ

15. ຫ້ອງທານ ຍຸດຕິທຳ

**ກ. ພາລະບົດບາດໜ້າທີ່ຂອງຫ້ອງການສົ່ງເສີມກະສິກຳ-ປ່າໄມ້.**

| ກ່ອນໄພ ພິບັດເກີດ | ໄລຍະໄພພິບັດເກີດ | ຫຼັງໄພພິບັດເກີດ |
|---|---|---|
| -ກະກຽມບັນດາຂໍ້ມູນຈຸດສ່ຽງຕໍ່ການເກີດໄພພິບັດຂໍ້ມູນເປົ້າໝາຍທີ່ຈະຖືກຜົນກະທົບທາງດ້ານກະສິກຳສະຖິຕິປູກຝັງລ້ຽງສັດຂໍ້ມູນລະບົບຊົນລະປະທານ.<br>- ສັງລວມບັນດາຂໍ້ມູນຕ່າງໆແລ້ວລາຍງານໃຫ້ຄະນກອງເລຂາ.<br>- ຕິດຕາມເກັບກຳຂໍ້ມູນອຸທົກກະສາດສົມທົບກັບກອງເລຂາລາຍງານແຈ້ງຂ່າວ.<br>- ກະກຽມພື້ນທີ່ເພື່ອຕັ້ງສູນຫຼົບໄພ.<br>- ກະກຽມແນວພັນພືດ,ພັນສັດ,ຝຸ່ນຢາຕ່າງໆ ແລະ ເຄື່ອງສັດຕະວະແພດ. | -ເຝົ້າລະວັງໄພນ້ຳຖ້ວມຢ່າງໄກ້ສິດແນະນຳວິທີການຕອບໂຕ້ໃຫ້ທັນການ.<br>- ລົງພື້ນທີ່ໆຖືກກະທົບເພື່ອແນະນຳວິທີການຟື້ນຟູ ຊີວິດດ້ານການກະສິກຳ (ການປູກຝັງ-ລ້ຽງສັດ).<br>-ຕິດຕາມການກະທົບໃສ່ລະບົບຊົນລະປະທານ ແນະນຳປະຊາຊົນປົກປັກຮັກສາເຄື່ອງຈັກສູບນ້ຳ ແລະ ພ້ອມທັງແນະນຳວິທີການ ກະກຽມເພື່ອປັບປຸງປົວແປງ ລະບົບຊົນລະປະທານ .<br>- ແຈ້ງຂ່າວພະຍາກອນເຕືອນໄພແຕ່ທົ່ວທີ ແລະ ແຕ່ລະໄລຍະ. | - ປະເມີນຜົນກະທົບດ້ານກະສິກຳຈາກນ້ຳຖ້ວມ.<br>- ລົງເຄື່ອນໄຫວນຳພາປະຊາຊົນປະຕິບັດ ແ ຜນການຟື້ນຟູທົດແທນປູກຝັງລ້ຽງສັດ, ລ້ຽງປາ ແລະ ປັບປຸງປົວແປງລະບົບຊົນລະປະທານ.<br>- ສະຫຼຸບຕີລາຄາຜົນການເຄື່ອນໄຫວຂອງຕົນ.<br>- ລາຍງານຜົນກະທົບຈາກໄພນ້ຳຖ້ວມໃຫ້ແກ່ຂັ້ນເທິງຂອງຕົນ. |

**ຂ . ຫ້ອງການແຮງງານ ສະຫວັດດີການ - ສັງຄົມ ແລະ ຍຸດຕິທຳ.**

| ກ່ອນໄພ ພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| -ປະສານສົມທົບກັບຄະນະກອງເລຂາ ກະກຽມບັນດາສິ່ງຈຳເປັນຕ່າງໆສຳລະຕອບໂຕ້ ໄພນ້ຳຖ້ວມ ເຊັ່ນ: ຄະນະທີມງານຕ່າງໆ .<br>- ກະກຽມສະຖານທີ່ບ່ອນຕັ້ງສູນຫຼົບໄພ ໃຫ້ປະຊາຊົນ .<br>- ສົມທົບກັບອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມອື່ນໆ.ປຸກລະດົມກຳລັງເພື່ອກຽມຮັບ | - ປຸກລະດົມຂົນຂວາຍກຳລັງຊາວໜຸ່ມ ປະຊາຊົນ ໃຫ້ເຂົ້າຮ່ວມປະຕິບັດກິດຈະກຳກັບທີມງານຂອງເມືອງ ,ແຂວງ.<br>- ປະສານສົມທົບ"ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກດ້ານພາຫະນະອຸປະກອນຕ່າງໆ ທີ່ຈະເປັນ.<br>- ຮ່ວມກັບທີມງານ ແລະປະຊາຊົນ | -ສົມທົບກັບພາກສ່ວນທີ່ກ່ຽວຂ້ອງປະເມີນຜົນກະທົບດ້ານຕ່າງໆຈາກໄພນ້ຳຖ້ວມເຮັດບົດສະຫຼຸບລາຍງານ .<br>- ສົມທົບກັບພາກສ່ວນຕ່າງໆເພື່ອຊ່ວຍຟື້ນຟູສະພາບຄືນໃໝ່.<br>- ຮ່ວມກັບຄະນະກຳມະການພາກສ່ວນທີ່ກ່ຽວຂ້ອງປຸກລະດົມວັດຖຸປັດໃຈຊ່ວຍເຫຼືອຜູ້ປະສົບ |

| | | |
|---|---|---|
| ມື ກັບໄພພິບັດ.<br>- ເຝິກອົບຮົມສ້າງສະຕິໃຫ້ປະຊາຊົນບັນດາບ້ານທີ່ມີຄວາມສ່ຽງສູງຕໍ່ຜົນກະທົບຈາກໄພພິບັດໃຫ້ເຂົາເຈົ້າຮູ້ໄດ້ຂັ້ນພື້ນຖານ,ວິທີປ້ອງກັນ ແລະ ຊ່ວຍຕົນເອງໃນເວລາເກີດໄພພິບັດ.<br>- ກຽມສະຖານທີ່ຮອງຮັບຍົກຍ້າຍໄປບ່ອນມທີ່ມີຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນ, ກະກຽມພາຫະນະວັດຖຸອຸປະກອນພ້ອມກຳລັງພົນເພື່ອເຄື່ອນຍ້າຍຜູ້ປະສົບເຄາະຮ້າຍໄປບ່ອນປອດໄພຢ່າງທັນການ. | ປະຕິບັດ ແມ່ນການຕອບໂຕ້ ( ຍົກຍ້າຍຊັບສິນຊ່ວຍເຫຼືອຜູ້ເຈັບເປັນ..)<br>- ດຳເນີນມາດຕະການຂັ້ນເດັດຂາດກັບຜູ້ທີ່ຊວຍໂອກາດກະທຳຜິດໃນເວລາເກີດໄພພິບັດ, ( ດ້ວຍລະບຽບກົດໝາຍ ) | ໄພ.<br>- ຮັບແລະພິຈາລະນາຄຳຮ້ອງທຸກຕ່າງໆຂອງປະຊາຊົນທີ່ໄດ້ຮັບເຄາະຮ້າຍຕ່າງໆທີ່ເຫັນວ່າມີປະກົດການຫຍໍ້ທໍ້ຕ່າງໆ ທີ່ກະທົບເຖິງຊີວິດ ແລະ ຊັບສິນ |

**<u>ຄ. ຫ້ອງການສາທາລະນະສຸກ.</u>**

| ກ່ອນການເກີດໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກຽມບັນດາຂໍ້ມູນຕ່າງໆ ທີ່ກ່ຽວພັນກັບພະຍາດລະບາດ ຕາມລະດູການ .<br>- ກະກຽມຮັບມືກັບໄພພິບັດເຝົ້າລະວັງ ການເກີດພະຍາດ ລະບາດ, ການບາດເຈັບເກີດຈາກອຸບັດຕິເຫດ<br>- ກະກຽມສະຖານທີ່ເພື່ອຕັ້ງຈຸດບໍລິການຢູ່ສູນຫຼົບໄພ.<br>- ກະກຽມອຸປະກອນການແພດ ແລະ ວາງຢາຕ່າງໆ. | -ລົງພື້ນທີ່ໆຖືກກະທົບເພື່ອຕິດຕາມເຝົ້າລະວັງການເກີດສະພາບເຈັບເປັນ ຈາກໄພພິບັດ ແລະ ພະຍາດລະບາດ .<br>- ໃຫ້ການບໍລິການທາງດ້ານສາທາລະນະສຸກເພື່ອປ້ອງກັນປິ່ນປົວບັນດາພະຍາດຕ່າງໆທີ່ເກີດຂື້ນໃນໄລຍະໄພນ້ຳຖ້ວມ ( ສຸຂະສຶກສາ-ກວດປິ່ນປົວ ) | - ລົງປະເມີນຜົນກະທົບຕໍ່ໂຄງລາງພື້ນຖານສາທາລະນະສຸກປະເມີນຄວາມຊ່ຽງຕໍ່ການເກີດພະຍາດ ພາຍຫຼັງນ້ຳຖ້ວມ ແລະ ສະຫຼຸບລາຍງານ.<br>- ລົງເຄື່ອນໄຫວໃຫ້ສຸຂະສຶກສານຳພາປະຊາຊົນເຮັດໜ້າທີ່ປ້ອງກັນພະຍາດ. |

**<u>ງ . ອົງການຈັດຕັ້ງມະຫາຊົນ ແລະ ແນວລາວຊ້າງຊາດ.</u>**

| ກ່ອນເກີດໄພພິບັດ | ໄລຍະໄພພິບັດເກີດ | ພາຍຫຼັງໄພພິບັດເກີດ |
|---|---|---|
| - ສົມທົບກັບພາກສ່ວນທີ່ກ່ຽວຂ້ອງປຸກ ລະດົມຂົນຂວາຍກຳລັງປະຊາຊົນ,ຊາວໜຸ່ມ, ແມ່ຍິງ,ເພື່ອກະກຽມຮັບ ມືກັບໄພພິບັດ . | - ປຸກລະດົມຂົນຂວາຍກຳລັງຊາວໜຸ່ມ, ປະຊາຊົນ,ໃຫ້ທ້າວທັນເຂົ້າຮ່ວມ ປະຕິບັດກິດຈະກຳກັບທີມງານທີ່ ເມືອງ-ແຂວງ. | -ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ປະເມີນຜົນກະທົບດ້ານຕ່າງໆ ຈາກນ້ຳຖ້ວມ ແລະ ເຮັດບົດສະຫຼຸບລາຍງານ. |

| | | |
|---|---|---|
| - ສະຫະພັນແມ່ຍິງ ເປັນເຈົ້າ ການເຄື່ອນໄຫວ ປຸກລະດົມ ແລະ ສຶກສາອົບຮົມປະຊາຊົນກ່ຽວກັບການປຸກຈິດສຳນຶກ ແບບປະຕູເຖິງປະຕູ | - ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນບ້ານ ແລະ ເມືອງເພື່ອອຳນວຍຄວາມສະດວກດ້ານພາຫະນະອຸປະກອນຕ່າງໆທີ່ຈຳເປັນ.<br>- ຮ່ວມກັບທີມງານ ແລະ ປະຊາຊົນປະຕິບັດແຜນການຕອບໂຕ້ ( ຍົກຍ້າຍຊັບສິນຊ່ວຍເຫຼືອຜູ້ເຈັບເປັນ ).<br>- ສະຫະພັນແມ່ຍິງເປັນເຈົ້າການໃນການປຸກລະດົມຈິດໃຈ ແລະ ສ້າງກິດຈະກຳຕ່າງໆເພື່ອກະກຽມຟື້ນຟູຫຼັງນ້ຳຖ້ວມ | - ສົມທົບກັບພາກສ່ວນຕ່າງໆເພື່ອລະດົມກຳລັງປະຊາຊົນຢູ່ພື້ນຖານຊ່ວຍຟື້ນຟູສະພາບຄືນໃໝ່.<br>- ຊ່ວຍຄະນະກຳມະການ ແລະ ພາກສ່ວນທີ່ກ່ຽວຂ້ອງປຸກລະດົມວັດຖຸປັດໃຈຊ່ວຍເຫຼືອຜູ້ປະສົງໄພ<br>- ສະຫະພັນແມ່ຍິງສ້າງກິດຈະກຳຟື້ນຟູ ສະພາບຫຼັງນ້ຳຖ້ວມດ້ວຍການສົ່ງເສີມຜະລິດຕະພັນເປັນສິນຄ້າ |

**<u>ຈ ປ ກ ຊ - ປ ກ ສ ແລະ ຍ ທ ຂ</u>**

| ກ່ອນເກີດໄພພິບັດ | ໄລຍະໄພພິບັດເກີດ | ພາຍຫຼັງໄພພິບັດເກີດ |
|---|---|---|
| - ກະກຽມກຳລັງພົນ<br>- ກະກຽມວັດຖຸອຸປະກອນເພື່ອຄົ້ນຫາກູ້ໄພ ແລະ ຍົກຍ້າຍ<br>- ກະກຽມພາຫະນະຮັບໄຊ້ ( ລົດ, ເຮືອ | - ເອົາກຳລັງລົງສະໜາມ<br>- ຄົ້ນຫາຊ່ວຍເຫຼືອຜູ້ປະສົບໄພ<br>- ຍົກຍ້າຍວັດຖຸສິ່ງຂອງໄປສູ່ບ່ອນປອດໄພ<br>- ນຳພາຂະບວນການປະຊາຊົນເຮັດຄັນຄູກັນນ້ຳໄຫຼເຂົ້າ ( ເປົ້າດິນຊາຍ) | - ນຳພາສ້າງຂະບວນການສ້ອມແປງສິ່ງສາທາລະນະປະໂຫຍດທີ່ຖືກກະທົບ<br>- ສ້າງແຜນຂໍທຶນສຳລັບການສ້ອມແປງໃຫຍ່ |

**<u>ສໍ ແຜນການການລົງທຶນ,ການເງິນ, ອຸດສະຫະກຳການຄ້າ.</u>**

| ກ່ອນເກີດໄພພິບັດ | ໄລຍະໄພພິບັດເກີດ | ພາຍຫຼັງໄພພິບັດເກີດ |
|---|---|---|
| - ສ້າງແຜນເງິນແຜນງານແຜນຄົນ<br>- ສ້າງຕັ້ງກອງທຶນໄພພິບັດຂັ້ນເມືອງ<br>- ເຊື່ອມສານແຜນ F P P ເຂົ້າກັບແຜນພັດທະນາຂອງເມືອງ<br>- ລະດົມທຶນ | - ຄຸ້ມຄອງການໄຊ້ຈ່າຍທຶນ<br>- ຊອກຫາທຶນເພີ້ມ<br>- ເຄື່ອນໄຫວດັດສົມລາຄາສິນຄ້າ | - ສະຫຼຸບການໄຊ້ຈ່າຍ<br>- ສ້າງແຜນການລະດົມທຶນຕໍ່ |

**ຊໍ  ໂຄສະນາອົບຮົມ ແລະ ຖະແຫຼງຂ່າວວັດທະນະທຳ ,  ທີ່ດິນ ແລະ ສິ່ງແວດລ້ອມ.**

| ກ່ອນເກີດໄພພິບັດ | ໄລຍະໄພພິບັດເກີດ | ພາຍຫຼັງໄພພິບັດເກີດ |
|---|---|---|
| - ລົງໂຄສະນາປະຊາສຳພັນຮ່ວມກັບຄະນະກຳມະການ<br>- ຜະລິດສືໍາໂຄສະນາ<br>- ກະກຽມວັດຖຸອຸປະກອນສຳລັບການໂຄສະນາ ແລະ ອອກຂ່າວ<br>-ສຳຫຼວດເກັບກຳບັນດາຂໍ້ມູນຈຸດສ່ຽງຕໍ່ການເກີດໄພພິບັດ,ຂໍ້ມູນເປົ້າໝາຍທີ່ຖືກກະທົບທາງດ້ານທີ່ດິນ,ນ້ຳ ແລະ ສິ່ງແລດລ້ອມ.<br>-  ເຂົ້າຮ່ວມກັບຄະນະກຳມະການເພື່ອ ກຳນົດພື້ນທີ່ບ່ອນທີ່ຈະຕັ້ງວສູນລົບໄພ<br>- ແຈ້ງຂ່າວ ພະຍາກອນເຕືອນໄພແຕ່ທົ່ວທີ ແລະ ແຕ່ລະໄລຍະ<br>- ສັງລວມບັນດາຂໍ້ມູນຕ່າງໆແລ້ວລາຍງານໃຫ້ຄະນະກອງເລຂາ | - ລົງເກັບກຳຂ່າວສານ<br>- ລາຍງານຂ່າວສານ<br>- ໂຄສະນາສຶກສາອົບຮົມປະຊາຊົນທີ່ຖືກກະທົບອຸທົກກະໄພ<br><br>- ລະວັງໄພນ້ຳຖ້ວມຢ່າງໃກ້ສິດ ແລະ ແນະນຳວິທີການຕອບໂຕ້ທັນການ.<br>- ລົງພື້ນທີ່ໆກະທົບເພື່ອແນະນຳວິທີການພື້ນຟູທາງດ້ານທີ່ດິນ, ນ້ຳ ແລະ ສິ່ງແວດລ້ອມ.<br>- ຕິດຕາມການກະທົບໃສ່ລະຫວ່າງທີ່ດິນ,ນ້ຳ ແລະ ສິ່ແວດລ້ອມ.<br>- ແຈ້ງຂ່າວພະຍາກອນເຕື່ອນໄພຟ້າແຕ່ລະໄລຍະ. | - ສະຫຼຸບຜົນການເຄື່ອນໄຫວຂອງຕົນ<br>- ອອກຂ່າວໂຄສະນາຜົນກະທົບ ແລະ ປຸກລະດົມຫາແຫຼ່ງທຶນ.<br><br>- ປະເມີນຜົນກະທົບທາງດ້ານທີ່ດິນ,ນ້ຳ ແລະ ສິ່ງແວດລ້ອມ ຈາກໄພນ້ຳຖ້ວມ.<br>- ລົງເຄື່ອນໄຫວນຳພາປະຊາຊົນປະຕິບັດແຜນການຟື້ນຟູທົດແທນປັບປຸງ,ປົວແປງທີ່ດິນ,ນ້ຳ ແລະ ສິ່ງແວດລ້ອມ.<br>- ສະຫຼຸບຕີລາຄາຜົນການເຄື່ອນໄຫວຂອງຕົນ.<br>- ລາຍງານດ້ານຜົນກະທົບຈາກໄພນ້ຳຖ້ວມໃຫ້ຂັ້ນເທິງຂອງຕົນ |

ຍໍ  ສຶກສາ ແລະ ກິລາ

| ກ່ອນເກີດໄພພິບັດ | ໄລຍະໄພພິບັດເກີດ | ພາຍຫຼັງໄພພິບັດເກີດ |
|---|---|---|
| - ກະກຽມສະຖານທີ່ການຮຽນການສອນຊົ່ວຄາວ<br>- ຂື້ນແຜນການນຳເອົາຫຼັກສູດໄພພິບັດເຂົ້າສອນຢູ່ໃນໂຮງຮຽນເປົ້າໝາຍ | - ເປີດການຮຽນການສອນຢູ່ຈຸດທີໄດກຳນົດໄວ້<br>- ນຳເອົາວັດຖຸອຸປະກອນການຮຽນການສອນລົງສູ່ໂຮງຮຽນ<br>- ເຮັດວຽກງານສຸຂະສຶກສາໃຫ້ຄູ ແລະ ນັກຮຽນຮູ້ຈັກຊ່ວຍເຫຼືອຕົນເອງ | - ປົວແປງອາຄານຮຽນ,ໂຕະຕັ່ງ, ກະດານດຳ, ເດີ່ນໂຮງຮຽນໃຫ້ຄືນສູ່ສະພາບປົກກະຕິ<br>- ລົງເຄື່ອນໄຫວກວດການປະເມີນຜົນກະທົບ<br>- ວາງແຜນການເພື່ອຕອບຕ້ານຮັບມືໃນປີຕໍ່ໄປ. |

**4.3** **ບັນດາທີມງານໄພພິບັດເມືອງ.**

- ທີມງານໄພພິບັດຂັ້ນເມືອງ ໄດ້ຖືກຈັດຕັ້ງຂຶ້ນໂດຍທ່ານ ຄະນະກຳການຄຸ້ມຄອງໄພພິບັດຂັ້ນເມືອງ ເຊິ່ງລວມມີ 4 ທີມແຕ່ລະທີມຈະແບ່ງເປັນ 4 ຈຸດັ່ງນີ້.

4.3.1 ທີມງານຄຸ້ມຂໍ້ມູນຂ່າວສານ ປະສານງານ ປະເມີນຜົນກຳທົບ ໃນນີ້ລວມມີຄະນະກຳມະການຄຸ້ມຄອງ ໄພພິບັດຂັ້ນເມືອງ,ບ້ານ,ຄະນະກອງເລຂາ ແລະ ຫ້ອງການທີ່ກ່ຽວຂອງລວມທັງໝົດ 35 ຄົນ.

4.3.2 ທີມງານຄົ້ນຄ້ວາ ແລະ ກູ້ໄພໃນນີ້ລວມມີກຳລັງທະຫານເມືອງ,ກຳລັງ ປ ກ ສ ເມືອງ,ຄ ຂ ປ ກ ເມືອງ,ກຳລັງສຳຮອງທ້ອງຖິ່ນກຸ່ມບ້ານ ອົງການຈັດຕັ້ງມະຫາຊົນ ລວມທັງໝົດ 186 ຄົນ.

4.3.3 ທີມງານສາທາລະນະສຸກ ລວມມີທີມງານວິຊາການແພດຫ້ອງການສາທາເມືອງ ສຸກສາລາ ກຸ່ມບ້ານ ອາສາສະໝັກບ້ານ ລວມທັງໝົດ 57 ຄົນ.

4.3.4 ທີມງານປະສານງານບັນເທົາທຸກລວມມີຫ້ອງການ ການເງິນເມືອງ,ອຸດສາຫະກຳການຄ້າ,ແຮ່ງງານ ແລະ ສະຫັວດດີການສັງຄົມ,ລວມມີ 26 ຄົນ.

**+ ລາຍລະອຽດມີຕາຕະລາງລຸ່ມນີ້:**

| ລ/ດ | ລາຍລະອຽດຂອງທີມງານ | ຈຳນວນ | ຄວາມຮັບຜິດຊອບຂອງແຕ່ລະທີມງານ |
|---|---|---|---|
| 1 | ທີມງານຄົ້ນຄ້ວາຂໍ້ມູນຂ່າວສານ ປະສານງານປະເມີນຜົນກະທົບ. | 48 | 1 ປະຊຸມສາມັນ-ວິສາມັນ.<br>- ຄຸ່ມຄອງສະພາບໄພພິບັດພາຍໃນເມືອງ. |
| - | ມາຈາກຄະນະກຳມະການຂັ້ນເມືອງ. | 22 | - ເກັບກຳຂໍ້ມູນສັງລວມຂໍ້ມູນໄພພິບັດເພື່ອລາຍງານຂັ້ນເທິງກຳນົດສະຖານທີ່ສູນລົບໄພ. |
| - | ມາຈາກບ້ານ. | 9 | - ວ່າງແຜນການເພື່ອຕອບໂຕ້ໄພພິບັດນໍ້າຖ້ວມ. |
| - | ມາຈາກກອງເລຂາ. | 4 | - ສະຫຼຸບປະເມີນຜົນກະທົບຈາກໄພພິບັດ. |
| - | ມາຈາກຫ້ອງການທີ່ກ່ຽວຂ້ອງ. | 13 | |
| 2 | ທີມງານຄົ້ນຫາ ແລະ ກູ້ໄພ. | 289 | 2.ມີເນື້ອທີໃນການຈັກຕັ້ງນຳໃຊ້ກຳລັງ ພ້ອມທັງພາຫະນະເຂົ້າໃນການເຄື່ອນຍ້າຍ,ຄົ້ນຫາ,ກູ້ໄພອອກຈາກພື້ນທີ່ອັນຕະລາຍ ແລະ ຮັກສາຄວາມປອດໄພໃນພື້ນທີ່ |
| - | ກຳລັງທະຫານເມືອງ. | 8 | |
| - | ກຳລັງ ປ ກ ສ ເມືອງ. | 8 | |
| - | ຍທຂ ເມືອງ | 4 | |
| - | ກຳລັງສຳຮອງ(ທ້ອງຖິ່ນ) | 64 | |
| - | ຊາວໜຸ່ມ | 200 | |
| - | ມາຈາກກອງເລຂາ. | 5 | |
| 3 | ທີມງານ ສາທາລະນະສຸກ. | 61 | 3. ມີໜ້າທີ່ຈັດຕັ້ງວິຊາການເພື່ອໃຊໃນການທ້າງຫາກະກຽມໃນໄລ່ຍະໄພພິບັດ 3 ໄລ່ຍະຄື ປະຖົມພະຍາ ບານ, ສຸຂະສຶກສາ,ອານາໄມສິງແວດລ້ອມ. |
| - | ມາຈາກຫ້ອງການສາທາ. | 16 | |
| - | ມາຈາກສຸກສາລາກຸ່ມບ້ານ. | 4 | |
| - | ມາຈາກອາສາສະໝັກບ້ານ. | 37 | |
| - | ມາຈາກກອງເລຂາ. | 4 | |

| | | | |
|---|---|---|---|
| 4 | ທີມງານບັນເທົາທຸກຊ່ວຍເຫຼືອ. | 60 | 4. ມີໜ້າທີ່ຈັດຕັ້ງຊອກຫາແຫຼ່ງທຶນເພື່ອຊ່ວຍເຫຼືອ. |
| - | ມາຈາກ ຣ ສ ສ ເມືອງ. | 2 | - ມີໜ້າທີ່ລະດົມກຳລັງເຂົ້າໃນກິດຈະກຳຊ່ວຍເຫຼືອສຸກເສີນອົບຮົມແນວຄິດຜູ້ຖືກຜົນກະທົບ. |
| - | -ແຜນການການລົງທຶນ | 2 | |
| - | ມາຈາກການເງິນ. | 4 | - ເຝິກອົບຮົມໃຫ້ຄູ່,ນັກຮຽນຮັບຮູ່ວຽກງານຄົ້ນຄ້ວາໄພພິບັດ. |
| - | ມາຈາກການຄ້າ. | 2 | |
| - | ມາຈາກກຳມະບານ. | 12 | - ເຮັດວຽກງານສຸຂະສຶກສາແກ່ຊຸ່ມຊົນຜູ້ຖືກຜົນກະທົບ. |
| - | ມາຈາກແນວລາວສ້າງຊາດ. | 8 | |
| - | ມາຈາກກຸ້ມບ້ານ. | 18 | |
| | ມາຈາກສຶກສາ ແລະ ສຶກສາ | 12 | |

- ບັນດາທີມງານຂ້າງເທິງນັ້ນແມ່ນມາຈາກຄະນະກຳມະການ,ຄະນະກອງເລຂາເປັນຜູ້ກຳນົດ ແລະ ຈັດສັນບຸກຂະລາກອນ ແລ້ວນຳສະເໜີແຕ່ງຕັ້ງຈາກທ່ານປະທານເຊັ່ນ: ຕົວຢ່າງ ທີມງານສາທາລະນະສຸກ ກໍ່ແມ່ນຄະນະກຳມະການຈາກສາທາລະນະສຸກເປັນຜູ້ຈັດສັນດັ່ງນີ້ເປັນຕົ້ນ.

**4.4. <u>ຫ້ອງການຄວບຄຸ່ມໄພນ້ຳຖ້ວມຢູ່ລະດັບເມືອງ.</u>**

**4.4.1 <u>ຫ້ອງການຄວບຄຸ່ມໄພນ້ຳຖ້ວມ.</u>**

ແມ່ນສະຖານທີ່ບໍລິການຈັດການ ຄຸ້ມຄ້ອງການຈັດຕັ້ງປະຕິບັດແຜນການ ການເຄື່ອນໄຫວປ້ອງກັນຕອບໂຕ້ ແລະ ພື້ນພູທົດແທ່ນຜົນກະທົບຈາກໄພພິບັດນ້ຳຖ້ວມ.ເຊິ່ງມີການປະກອບບຸກຂະລາກອນພະທະນະ, ວັດຖຸອຸປະກອນ ແລະ ສິ່ງຮັບໃຊ້ອັນຈຳເປັນຕ່າງໆເຄື່ອນໄຫວທີ່ມີປະສິດທິຜົນ.

**<u>4.4.2. ບຸກຄະລະກອນຂອງຫ້ອງການຄວບຄຸ່ມໄພພິບັດນ້ຳຖ້ວມ</u>.**

- ບຸກຂະລາກອນທີ່ປະກອບເຂົ້າໃນຫ້ອງການດັ່ງກ່າວ ແມ່ນມາຈາກຄະນະກຳມະການ ແລະ ຄະນະກອງເລຂາມີລາຍລະອຽດດັ່ງນີ້,

1. ທ່ານ ຄຳໃບ ປະຊາໄຊ ຫົວໜ້າຫ້ອງການ ຮຮສ ເມືອງ
2. ທ່ານ ເໜືອຍຄຳ ວິລະວົງ ຮອງຫົວໜ້າຫ້ອງວ່າການປົກຄອງເມືອງ
3. ທ່ານ ສີສົມພອນ ຫ້ອງການສົ່ງເສີມກະສິກຳປ່າໄມ້ເມືອງ
4. ທ່ານ ບຸນໂຍ ກໍ່ສ້າງຮາກຖານ
5. ທ່ານ ວະສັນ ອຸດສະຫະກຳການຄ້າ
6. ທ່ານ ບຸນແຍງ ຮອງຫົວໜ້າ ຍ ທ ຂ
7. ທ່ານ ນາງ ຄຳຫຼ້າ ແຜນການການລົງທຶນ
8. ທ່ານ ສາຍຄຳ ໂຄສະນາອົບຮົມ
9. ທ່ານ ນາງ ວຽງສະໃໝ ພະນັກງານຈັດຕັ້ງເມືອງ
10. ທ່ານ ອຳພອນ ຫ້ອງການສຶກສາເມືອງ

11. ທ່ານ ນາງ ທວາດສະໝາ ຫ້ອງການ ຮຮສ ເມືອງ

12. ທ່ານ ບຸນທິງ ປ ກ ສ ເມືອງ

13. ທ່ານ ທັດສະດີ ຫ້ອງການປ ກ ຊເມືອງ

14. ທ່ານ ນາງ ເຂັມພອນ ພະນັກງານຊາວໜຸ່ມເມືອງ

15 ທ່ານ ນາງ ນວນຕາ ຮອງປະທານສະຫະພັນແມ່ຍິງເມືອງ

16. ທ່ານ ຂັນທອງ ພະນັກງານຫ້ອງການສາທາເມືອງ

17. ທ່ານ ສີສຸພັນ ພະນັກງານ ຖະແຫຼງຂ່າວວັດທະນະທຳ

18. ທ່ານ ນາງ ບຸນທະວີ ຫ້ອງການຄຸ້ມຄອງທີ່ດິນນ້ຳ ແລະ ສິ່ງແວດລ້ອມເມືອງ

19. ທ່ານ ສິນໄຊ ຫ້ອງການການເງິນເມືອງ

**4.4.3. ບັນຊີສິ່ງຮັບໃຊ້ສຳລັບຫ້ອງການ(ພາຫະນະ,ອຸປະກອນ).**

| ລ/ດ | ລາຍການອຸປະກອນ | ຫົວ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | ໜ່ວຍ | ຕ້ອງການ | ມີແລ້ວ | ຂໍສະເໜີ | |
| 1 | ຫ້ອງການ(8ມ X 12, ) | ຫຼັງ | 01 | 00 | 01 | |
| 2 | ລົດຮັບໃຊ້ພາກສະໜາມ. | ຄັນ | 01 | 00 | 01 | |
| 3 | ລົດໂຮງໜໍ | ຄັນ | 02 | 00 | 02 | |
| 4 | ລົດຈັກ | ຄັນ | 04 | 00 | 04 | |
| 5 | Computer | ຊຸດ | 02 | 00 | 02 | |
| 6 | TeLePhone/Fax | ເຄື່ອງ | 01 | 00 | 01 | |
| 7 | ໂທລະສັບຜ່ານດາວທຽມມືຖື. | ເຄື່ອງ | 21 | 10 | 11 | |
| 8 | ວິທະຍຸຕິດຕໍ່ໄລຍະໄກ. | ເຄື່ອງ | 21 | 00 | 21 | |
| 9 | ໂທລະໂຄງ | ຊຸດ | 09 | 05 | 4 | |
| 10 | ເຄື່ອງສາຍ VDO | ເຄື່ອງ | 01 | 00 | 01 | |
| 11 | ເຄື່ອງສາຍ LCD Projector | ເຄື່ອງ | 01 | 00 | 01 | |
| 12 | ກ້ອງຖາຍຮູບ. | ເຄື່ອງ | 01 | 00 | 01 | |
| 13 | ກ້ອງຖາຍ V D O | ເຄື່ອງ | 01 | 00 | 01 | |

- ບັນດາເຄື່ອງຮັບໃຊ້ດັ່ງກ່າວຂ້າງເທິງນີ້ແມ່ນເປັນຊັບສິນບັດຂອງລັດ ກໍ່ຄືຂອງຄະນະກຳມະການຂັ້ນເມືອງນັ້ນເອງ ການນຳໃຊ້ສິ່ງດັ່ງກ່າວຕ້ອງມີລະບຽບການ ແລະ ນະໂຍບາຍຂອງຄະນະກຳມະການທີ່ຖືກຮັບຮອງ ແລະ ອະນຸມັດນຳໃຊ້ໂດຍການຕົກລົງເຫັນດີຈາກເຈົ້າເມືອງໆເຊບັ້ງໄຟ.

## 5. ມາດຕາການຕຽມພ້ອມຕ້ານໄພນ້ຳຖ້ວມ.

### 5.1 ກິດຈະກຳການຕຽມພ້ອມຕອບໂຕ້ໄພພິບັດ.

5.1.1 **ການປູກຈິດສຳນຶກໃຫ້ແກ່ຊຸ່ມຊົນ.**

- ການບຸກຈິດສຳນຶກໃຫ້ແກ່ຊຸ່ມຊົນ ແມ່ນມີຄວາມສຳຄັນ ເປັນສິ່ງຈຳເປັນທີ່ຕ້ອງໄດ້ປະຕິບັດ ໃນຂົງເຂດຫຼືພື້ນທີ່ທີ່ມີຄວາມຫູ່ແຫຼມ ແລະ ສ່ຽງຕໍ່ໄພພິບັດນ້ຳຖ້ວມ ສິ່ງດັ່ງກ່າວແມ່ນຂະບວນແຫ່ງການສື່ສານສຳພັນລະຫ່ວາງຄະນະກຳມະການ ແລະ ພາບສ່ວນທີ່ກ່ຽວຂ້ອງ ໃນສັງຄົມຕະຫຼອດເຖິງບັນດາຊັ້ນຄົນໃນສັງຄົມກັບປະຊາຊົນຜູ້ດຳລົງຊີວິດໃນເຂດສ່ຽງດັ່ງກ່າວ ໃຫ້ຮັບຮູ້ເຂົ້າໃຈປັບປ່ຽນພຶດຕິກຳຂອງຕົນທີ່ບໍ່ສອດຄ່ອງກັບການສ່ຽງຕໍ່ຜົນກະທົບຈາກໄພພິບັດ ແລ້ວພ້ອມກັນສ້າງຄວາມຊື້ນເຄີຍ ກັບການດຳລົງຊີວິດທີ່ມີຄວາມສ່ຽງນັ້ນ ໃຫ້ການມາເປັນທັດສະນະອັນດີ ເພື່ອປ້ອງກັນຕອບໂຕ້ ແລະ ສ້າງກິດຈະກຳ ພື້ນຟູທົດແທນຜົນກະທົບໃຫ້ຄືນສູ່ສະພາບປົກກະຕິຫຼືກລັ້ງຄວາມສູນເສຍທາງດ້ານຊີວິດ ແລະ ຊັບສິນຕ່າງໆ ພາຍຫຼັງໄພພິບັດນ້ຳຖ້ວມ.

- ເພື່ອບັນລຸຜົນສຳເລັດແຜນດັ່ງກ່າວ ສິ່ງສຳຄັນແມ່ນຄະນະກຳມະການ ຫຼື ທີມງານທີ່ກ່ຽວຂ້ອງຕ້ອງມີຄວາມຮັບຮູ້,ຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ມີຄວາມສາມາດໃນການສື່ສານເຖິງປະຊາຊົນໃນເຂດສ່ຽງສູງ, ດັ່ງນັ້ນ ຜູ້ຮັບຜິດຊອບແມ່ນມີຄວາມຈຳເປັນ ຕ້ອງມີຄວາມຮູ້,ຄວາມສາມາດ(ການຝຶກອົບຮົມທັດສະນະສຶກສາ) ມີເຄື່ອງມືສຳລັບໂຄສະນາເຊັ່ນ: ຂໍ້ກຳນົດລະບຽບຂອງລັດ, ຄຳສັ່ງບັນດາອຸປະກອນຕ່າງໆ ເຄື່ອງສຽງ,ເຄື່ອງສາຍ,ເຄື່ອງພິມ,ຮູບພາບ ແລະ ຂໍ້ມູນຂ່າວສານອື່ນໆ.

**5.1.2. ລະບົບພະຍາກອນ ແລະ ເຕືອນໄພລ່ວງໜ້າ.**

- ລະບົບການພະຍາກອນ ແລະ ການເຕືອນໄພລ່ວງໜ້າ ແມ່ນມີຄວາມສຳຄັນຫຼາຍຕໍ່ການວ່າງແຜນການປ້ອງກັນ ແລະຕອບໂຕ້ໄພນ້ຳຖ້ວມເຊັ່ນ: ການວາງແຜນຊ່ວຍຍົກຍ້າຍປະຊາຊົນໄປສູ່ເຂດປອດໄພ ຊ່ວຍອຳນວຍຄວາມສະດວກແກ່ເຂົາເຈົ້າໃນການຕໍ່ສູ້ກັບໄພອັນຕະລາຍ.

-ສ່ວນປະກອບຂອງລະບົບການພະຍາກອນ ແລະ ການເຕືອນໄພ ແມ່ນມາຈາກຫຼາຍປັດໃຈເຊິ່ງລວມເອົາທັງປະສົບການຕົວຈິງທີ່ປະຊາຊົນກໍ່ຄືຂົງເຂດພື້ນທີ່ສ່ຽງໄພ ໄດ້ປະສົບພົບພໍ້ຜ່ານມາຈົນໄປເຖິງລະບົບການສ້າງຕັ້ງທີມງານ ຕິດຕາມສະພາບການອາສາສະມັກເຄືອຄ່າຍແຕ່ລະຈຸດແລະ ຂໍ້ມູນຂ່າວສານທີ່ມາຈາກຫຼາຍແຫຼ່ງເລີ້ມຈາກຂໍ້ມູນຂອງແຂວງ,ຂອງປະເທດ ຂອງພາກພື້ນ ແລະ ຂອງໂລກ ນອກນັ້ນບັນດາວັດຖຸອຸປະກອນທີ່ຈຳເປັນສຳລັບລະບົບນີ້ກໍ່ມີຄວາມຫລາກຫຼາຍ ຕໍ່ການຕິດຕາມເຝົ້າລະວັງໄພພິບັດເຊັ່ນ: ເຄື່ອງໝາຍຕິດຕາມລະດັບນ້ຳ,ເຄື່ອງມືອຸປະກອນລະບົບສື່ສານລາຍງານເຜີຍແຜ່ຂ່າວສານພະຍາກອນນ້ຳຖ້ວມດັ່ງນີ້ເປັນຕົ້ນ.

5.1.3. **ລະບົບສ້າງແຜນງານກິດຈະກຳຕ່າງໆ.**

- ລະບົບການວ່າງແຜນງານກິດຈະກຳຕ່າງໆສຳລັບປ້ອງກັນຕອບຕ້ານ ແລະ ພື້ນຟູຜົນກະທົບຈາກໄພພິບັດນ້ຳຖ້ວມ ແມ່ນການຫັນເອົາແນວທາງ ກໍ່ຄືຍຸດທະສາດໃນການຕ້ານໄພພິບັດນັ້ນມາເປັນແຜນວຽກ ເປັນແຜນກິດຈະກຳອັນລະອຽດເພື່ອແນ່ສ່ບັນລຸເປົ້າໝາຍການສູນເສຍຊີວິດ ແລະ ຊັບສິນຂອງລັດ ແລະ ຂອງປະຊາຊົນ ໃນເຂດທີ່ມີຜົນກະທົບຊຶ່ງແຜນງານກິດຈະກຳຕ່າງໆ ນັ້ນຈະຕິດພັນກັບໂຄງປະກອບການຈັດຕັ້ງຂອງຄະນະກຳມະການ, ຄະນະກອງເລຂາ ແລະ ຄະນະທີມງານຕ່າງໆ ( ທີມງານຄຸ້ມຄອງຂໍ້ມູນຂ່າວສານ ປະສານງານປະເມີນຜົນກະທົບ ທີມງານຄົ້ນຫາ ແລະ ກູ້ໄພ ທີມງານສາທາລະນະສຸກ ແລະ ທີມງານປະສານງານບັນເທົາທຸກ).

## 6. ການປະຕິບັດມາດຕາການຕອບໂຕ້.

**6.1 ການກະກຽມຕອບໂຕ້ໄພພິບັດ.**

- ໃນເມື່ອຫາກມີສັນຍານເຕືອນໄພອັນຕະລາຍຈາກນ້ຳຖ້ວມແລ້ວ ຄະນະກຳມະການ ແລະ ພາກສ່ວນຕ່າງໆທີ່ຮັບຜິດຊອບຕ້ອງໄດ້ມີການກຽມພ້ອມຕອບໂຕ້ໃຫ້ທັນເວລາເຊັ່ນ: ການຈັດຕັ້ງສູນຫລົບໄພພິບັດ.

- ໃນສະຖານທີ່ທີ່ໄດ້ກຳນົດໄວ້ດ້ວຍການຈັດຫາເຕັ້ນ ວັດຖຸອຸປະກອນຕ່າງໆທີ່ຈຳເປັນ,ເຄື່ອງຮັບໃຊ້,ເຄື່ອງຄົວ, ເຂົ້າສານອາຫານແຫ້ງນ້ຳດື່ມ, ນ້ຳໃຊ້ວິດຖ່າຍຊົ່ວຄາວ.ຕຽມພ້ອມພະຫະນະຂອງການເຄື່ອນຍ້າຍ( ເຮືອ, ລົດ,ທີມງານ ແລະ ອື່ນໆ) ຕຽມພ້ອມລະບົບການສື່ສານປະສານງານໃຫ້ຄົບຊຸດຈັດຕັ້ງໜ່ວຍແພດປະຈຳສູນພ້ອມທັງອຸປະກອນທ່ອານຢາໃຫ້ພຽງພໍ ແລະ ສິ່ງສຳຄັນແມ່ນປຸກລະດົມກຳລັງທົ່ວຊຸ່ມຊົນ ແລະ ທີມງານເຮັດຄັນຄູປ້ອງກັນນ້ຳໃຫ້ແຂງແກ່ນ ແລະ ຮັບປະກັນພ້ອມທັງຈັດຕັ້ງການເວນຍາມເຝົ້າລະວ່າງຢ່າງເປັນປະຈຳຕະຫຼອດ 24 ຊົ່ວໂມງ

**6.2ການປະຕິບັດການຕອບໂຕ້ໄພພິບັດ**.

- ໃນເມືອ່ສັນຍານເຕືອນໄພອັນຕະລາຍ ຫາກເຖິງຈຸດສູງສຸດແລ້ວ ບັນດາທີມງານ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆຕະຫຼອດເຖິງປະຊາຊົນໃນເຂດນັ້ນ: ຕ້ອງໄດ້ພ້ອມກັນປະຕິບັດມາດຕາການຕອບໂຕ້ຢ່າງວ່ອງໄວຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນເອງເຊັ່ນ: ທີມງານຄຸ້ມຄອງຂໍ້ມູນຂ່າວສານປະສານງານ ປະເມີນຜົນກາພທົບກໍ່ຕ້ອງເພີ້ມຄວາມເອົາໃຈໃສ່ ໃນການຕິດຕາມໄພອັນຕະລາຍເກັບກຳຂໍ້ມູນຂ່າວສານ ແລະ ລາຍງານຢ່າງເປັນປົກກະຕິຕາມສະພາບຄວາມຜັນແປຂອງໄພພິບັດ ພ້ອມນັ້ນກໍ່ຕ້ອງໄດ້ປະສານຂໍຄວາມຊ່ວຍເຫຼືອຈາກທີມງານອື່ນໃນກໍລະນີຈຳເປັນ ທີມງານຄົ້ນຫາ ແລະ ກູ້ໄພກໍ່ຕ້ອງໄດ້ພ້ອມກັນປະຕິບັດມາດຕາການ ຄົ້ນຫາກອບກູ້ ແລະເຄືອນຍ້າຍສິ່ງຕ່າງໆ( ຄົບສັດລ້ຽງ,ວັດຖຸສິ່ງຂອງ)ໄປສູ້ສູນລົບໄພທີໄດ້ຈັດສັນໄວ້ທີມງານສາທາລະນະສຸກກໍ່ເຮັດໜ້າທີ່ໂຄສະນາ ສຸຂະສຶກສາ ພ້ອມທັງໃຫ້ການປິ່ນປົວຜູ້ຖືກບາດເຈັບ ແລະ ເປັນພະຍາດສ່ວນທີມງານປະສານງານພື້ນພູ ແລະ ບັນເທົາກໍ່ເຮັດໜ້າທີ່ຄຸ້ມຄ້ອງສະຖານທີ່ຫລົບໄພ ຊ່ວຍເຫຼືອສິງຈຳເປັນເພື່ອບັນເທົ່າທຸກໃນພາວະສຸກເສີນ ເຮັດໜ້າທີ່ປຸກລະດົມແນວຄິດຂອງປະຊາຊົນໃຫ້ອຸ່ນອ່ຽນ ແລະ ໃຫ້ບົດຮຽນປຸກຈິດສຳນຶກໃຫ້ແກ່ປະຊາຊົນເພື່ອຫຼຸດຜ່ອນຜົນກະທົບພາຍຫຼັງນ້ຳຖ້ວມດ້ວຍການອົບຮົມແນະນຳວິທີປູກ,ວິທີລ້ຽງ,ວິທີປັບປຸງ,ປົວແປງອາຄານ ບ້ານເຮືອນ ແລະ ສິ່ງສາທາລະນະ ( ລະບົບຊົນລະປະທານໂຮງຮຽນ, ໂຮງໝໍ,ວັດວາ ) ໃຫ້ຄືນສູ້ສະພາບປົກກະຕິດັ່ງນີ້ເປັນຕົ້ນ.

## 7.ການປັບປຸງພື້ນພູໃຫ້ຄືນສູ້ສະພາບເດີມ.

**7.1 ກິດຈະກຳຂອງການປັບປຸງເພື່ອໃຫ້ກັບຄືນສູ້ສະພາບເດີມ.**

- ພາຍຫຼງໄພພິບັດນ້ຳຖ້ວມໄດ້ຢຸດຕິລົງຄະນະກຳມະການ ຄະນະກອງເລຂາ ແລະ ພາກສ່ວນທີ່ກ່ງວຂ້ອງກໍ່ຕ້ອງໄດ້ພ້ອມກັນຈັດຕັ້ງປະຕິບັດພາລະບົດບາດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນໃນໄລຍະຫຼັງນ້ຳຖ້ວມສິງສຳຄັນແມ່ນການເກັບກຳຂໍ້ມູນ ແລະ ສະຫຼຸບປະເມີນຜົນກະທົບຈາກນ້ຳຖ້ວມພ້ອມທັງເຮັດໜ້າທີ່ພື້ນພູທົບແທນຜົນກະທົບດັ່ງກ່າວໃຫ້ກັບຄືນສູ່ສະພາບປົກກະຕິ ສະນັ້ນເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍນັ້ນມີຄວາມຈຳເປັນຫຼາຍຕ້ອງໄດ້ຄາດຄະເນຄວາມຕ້ອງການບັນດາສິ່ງຈຳເປັນຕ່າງໆໂດຍອີງໃສ່ການສົມທຽບຜົນກະທົບຈາກໄພພິບັດໃນຄັ້ງຜ່ານມາເຊັ່ນ ( ປີ 2005 ຜົນກະທົບຈາກໄພນ້ຳຖ້ວມແມ່ນມີຄວາມເສຍຫາຍຢ່າງຫຼວງຫຼາຍ ) ໂດຍສະເພາະແມ່ນຜົນກະທົບທາງດ້ານກະສິກຳລອງລົງມາ

ແມ່ນດ້ານວັດທະນະທຳ ( ສຶກສາ,ສາທາ,ວັດວາອາຮາມ) ແລະ ດ້ານພື້ນຖານໂຄງລ່າງ ຄົມມະນາຄົມ ລຽບຕາມ ລຳດັບລາຍລະອຽດດັ່ງລຸ່ມນີ້:

+ ຕາຕະລລາງສະແດງຜົນເສຍຫາຍຜົນກະທົບໄພນ້ຳຖ້ວມປີ 2005

| ລ/ດ | ເນື້ອໃນລາຍການ | ມູນຄ່າເສຍຫາຍ | ໝາຍເຫດ |
|---|---|---|---|
| 1 | ຜົນກະທົບດ້ານກະສິກຳ | | ( x 1 ລ້ານກີບ ) |
| - | ການປູກຝັງ(ນາປີ) | 1,550,00 | |
| - | ຊົນລະປະທານ | 700,00 | |
| - | ການລ້ຽງສັດ | 62,00 | |
| 2 | ດ້ານວັດທະນະທຳບສັງຄົມ | | |
| | ການສຶກສາ | 53,00 | |
| | ສາທາລະນະສຸກ | 768,46 | |
| 3 | ດ້ານໂຄງລ່າງຄົມມະນາຄົມ | 287,84 | |
| | ລວມ | 3,421,3 | |

- ຈັດຕັ້ງປະຕິບັດແຜນການບູລະນະພື້ນພູທົບແທນຕາມແຜນງານກິດຈະກຳຕ່າງໆບົນພື້ນຖານການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງບັນດາຂະແໜ່ງການທີ່ກ່ຽວຂ້ອງຕາມການກຳນົດໄວ້ໃນຂ້າງເທິງນັ້ນ:
- ຫ້ອງການຄວບຄຸ່ມໄພພິບັດ,ກອງເລຂາຄະນະກຳມະການປະສານສົບທົບ ກັບບັນດາຂະແໜ່ງການຕ່າງໆໃນການຕິດຕາມຊຸກຍູ້ປະເມີນ ແລະ ສະຫລບລາຍວງານຜົນການຈັດຕັ້ງປະຕິບັດແຜນການໃໝ່ແຕ່ລະໄລຍະ.

## 8. ມາດຕາການ ການຫຼຸດຜ່ອນ.

8.1 ໂຄງສ້າງຂອງການຫລດຜ່ອນ.

8.1.1. ການກໍ່ສ້າງຄູປ້ອງກັນນ້ຳຖ້ວມ ແລະ ຄອງລະບາຍນ້ຳ.

ກ. ການກໍ່ສ້າງທາງຊົນນະບົດຕິດພັນກັບການສ້າງຄັນຄູປ້ອງກັນນ້ຳຖ້ວມ.

- ກໍ່ສ້າງທົນທາງຕິດພັນກັບການກໍ່ສ້າງຄູກັນນ້ຳເພື່ອແນ່ໃສ່ຫລດຜ່ອນຜົນກະທົບນ້ຳຖ້ວມແຕ່ລະປີ,ເຊິ່ງມີອົງປະກອບ 02 ພາກສ່ວນໃຫ່ຍ.
- ພາກສ່ວນການສ້າງທາງທີ່ສາມາດເປັນຄັນຄູກັນນ້ຳໄດ້.
- ພາກສ່ວນການສ້າງ ແລະ ປະຕູຢູ່ແຕ່ລະປາກຫ້ວຍ.

+ ພາກສ່ວນການສ້າງທົນທາງຕິດພັນຄັນຄູກັນນ້ຳ.

| ລ/ດ | ຊື່ທ່າງຈາກຈຸດເລີ່ມຫາຈຸດສຸດທ້າຍ | ລວງຍາວKm | ສະພາບທົນທ່າງ | ໝາຍເຫດ |
|---|---|---|---|---|

| | | | | |
|---|---|---|---|---|
| 1 | ແກ້ງແປ-ທ່າຄໍ້ | 1.800 | ຍັງບໍ່ທັນເປັນທ່າງແລະຄັນຄູ | |
| 2 | ທ່າຄໍ້-ທ່າຫາດ | 2.500 | ຍັງບໍ່ທັນເປັນທາງແລະຄັນຄູ | |
| 3 | ຂົວເຊ-ໜອງບອນ | 1.500 | ເປັນທາງແລ້ວແຕ່ຍັງບໍ່ປັນຄັນຄູ | |
| 4 | ໜອງບອນ-ດ້າງທ່າ | 1000 | ເປັນທາງແລ້ວແຕ່ຍັງບໍເປັນຄັນຄູ | |
| 5 | ດ້າງທ່າ-ນາພອກ | 1500 | ເປັນທາງແລ້ວແຕ່ຍັງບໍເປັນຄັນຄູ | |
| 6 | ນາພອກ-ຍາງຄໍາ | 3.500 | ເປັນທາງແລ້ວແຕ່ຍັງບໍ່ເປັນຄັນຄູ | |
| 7 | ຍາງຄໍາ-ຫາດຄໍາຮຽງ | 3.000 | ເປັນທາງແລ້ວແຕ່ຍັງບໍ່ເປັນຄັນຄູ | |
| 8 | ຫາດຄໍາຮຽງ-ສອກເບາະ (ໜອງບົກ) | 3.200 | ຍັງບໍ່ທັນເປັນທາງແລະຄັນຄູ | |

# ພາກສ່ວນກໍ່ສ້າງປະຕູນໍ້າ

+ ຊື່ຫ້ວຍທີ່ບໍ່ທັນມີປະຕູນໍ້າ

1. ຫ້ວຍແກ້ງແປ
2. ຫ້ວຍຂົວຜີ
3. ຫ້ວຍຊຽງຊອບ
4. ຫ້ວຍຍາງ ( ຂົວເຊ )
5. ຮ່ອງກັ່ງ
6. ຫ້ວຍສາຍພາຍ
7. ຫ້ວຍພອກ
8. ຫ້ວຍປາກາ

ຂ. ການຂຸດຄ່ອງລະບາຍນໍ້າລົງສູ້ນໍ້າເຊບັ້ງໄຟ.

- ຂຸດຄອງລະບາຍນໍ້າຈາກທົ່ງນາຫາດຄໍາຮຽງ,ຍາງຄໍາ,ນາພອກ,ດ້າງທ່າ,ໜອງບອນ ແລະ ບ້ານສ້ອມ,ບ້ານແກ້ງແປ ລົງສູ້ນໍ້າເຊ.

8.2. ການກຽມພ້ອມທ່າງດ້ານບໍ່ແມ່ນໂຄງສ້າງ.

- ທ່າງດ້ານນີ້ແມ່ນການເສີມສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃຫ້ແກ່ຊຸ່ມຊົນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງໂດຍການຈັດຕັ້ງປະຕິບັດກິດຈະກໍາຕ່າງໆຄື:

+ ການປູກຈິດສໍານຶກໃຫ້ແກ່ຊຸ່ມຊົນ ເພື່ອໃຫ້ການພື້ນພູແນວຄິດຈິດໃຈຂອງປະຊາຊົນຜູ້ຖືກກະທົບ ແລະສຶກສາອົບຮົມເນາະນໍາວິທີການຕ່າງໆເພື່ອປັບປຸງປົວແປງສະພາບຜົນກະທົບໃຫ້ກັບຄືນສູ້ພາວະເດີມ.

+ ສ້າງຕັ້ງອົງການຈັດຕັ້ງສັງຄົມໃນຂົດເຂດຖືກກະທົບເພື່ອຊ່ວຍເຄື່ອນໄຫວຈັດຕັ້ງປະຕິບັດກິດຈະກໍານໍາຄະນະກໍາມະການເປັນຕົ້ນແມ່ນການສ້າງຕັ້ງກອງທຶນຫຼືການຊ່ວຍໂຄສະນາປະຊາສໍາພັນຂໍ້ມູນຂ່າວສານຕ່າງໆດັ່ງນີ້:

+ ການນໍາເອົນຫຼັກສູດການຮຽນການສອນກ່ຽວກັບໄພພິບັດເຂົ້າສູ້ໂຮງຮຽນ.

+ ການວ່າງແຜນນໍາໃຊ້ທີ່ດິນ ແລະ ອື່ນໆ

+ ການສ້າງແຜນທີ່ນໍ້າຖ້ວມ ແລະ ການກໍານົດຈຸດຫຼໍ່ແຫຼມ.

+ການສ້າງ ແລະ ປັບປຸງລະບົບເຕືອນໄພ.

## 9. ການຈັດສັນງົບປະມານ ແລະ ຄວາມຕ້ອງການແຫຼ່ງຊັບພະຍາກອນອື່ນໆ.

- ໃນແຕ່ລະໄລ່ຍະຂອງການຕ້ານໄພພິບັດນ້ຳຖ້ວມ ( ໄລ່ຍະທ້າງທາກະກຽມ/ໄລ່ຍະຕອບໂຕ້/ໄລ່ຍະພື້ນຟູ ແລະ ປົວແປງຄືນ ) ແມ່ນລວນແລ້ວແຕ່ມີຄວາມສຳຄັນ ແລະ ຈຳເປັນທີ່ສຸດໃນການຈັດສັນງົບປະມານແຫຼງທຶນ ແລະ ບັນດາຊັບພະຍາກອນຕ່າງໆທີ່ຕ້ອງການຊຶ່ງການຈັດສັນ ແລະ ແບ່ງປັນດັ່ງກ່າວນັ້ນແມ່ນອີງຕາມໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນໃນຄະນະກຳມະການທີມງານຕ່າງໆລາຍລະອຽດຂອງແຜນງົບປະມານມີດັ່ງຕາຕະລ່າງຕໍ່ໄປນີ້

**ແຜນງົບປະມານສຳລັບຕອບໂຕ້ໄພນ້ຳຖ້ວມ ທີ່ວເມືອງເຊບັ້ງໄຟ ປະຈຳປີ 2009-2010**

| ລ/ດ | ແຜນງານ ກິດ | ພື້ນທີ່ປະຕິບັດ ( ເມືອງ-ບ້ານ) | ຜູ້ຮັບຜິດຊອບ | ເວລາ ປະຕິບັດ | ງົບປະ ມານ (USD) | ແຫຼ່ງ ທຶນ |
|---|---|---|---|---|---|---|
| 01 | -ແຕ່ງຕັ້ງຄະນະກຳມະການແລະຄະນະປະສານງານ | ເມືອງ | ເມືອງ | 2009 | 150 | |
| 02 | - ສ້າງຕັ້ງຫ້ອງການຄະນະ ກຳມະການ ປະສານ ແລະ ເຄື່ອງປະກອບ | ເມືອງ | ເມືອງ | 2010 | 76.200 | |
| 03 | - ສ້າງຕັ້ງທີມງານແພດ ແລະ ປະກອບສິ່ງຈຳປັນ ຮ່ວມໂຮງໝໍເມືອງນຳ | ບ້ານ | ສາທາ ເມືອງ/ສຸກສາລາ | 2009-2010 | 287.000 | |
| 04 | - ສ້າງຕັ້ງທີມງານກູ້ໄພ ແລະເຄື່ອນຍ້າຍຜູ້ປະສົບໄພ | 16 ບ້ານສ່ຽງໄພ | ຄພມ | 2009-2010 | 60.750 | |
| 05 | - ເກັບກຳຂໍ້ມູນຂ່າວສານ ແລະ ສ້າງແຜນ | ເມືອງ | ຄພມ | 2009-2010 | 2.500 | |
| 06 | - ສ້າງແຜນເພື່ອຂໍແຫຼ່ງທຶນຕຽມພ້ອມຕ້ານໄພນ້ຳຖ້ວມ | ເມືອງ | ຄພມ | 2009-2010 | 1.500 | |
| 07 | - ກອງປະຊຸມ D D M Cໃຫ້ຄວາມຮູ້ກ່ຽວ ກັບການຄຸ້ມຄອງໄພພິບັດ | ເມືອງ | ຄພມ | 2009-2010 | 1.500 | |
| 08 | - ກອງປະຊຸມສະຫຼຸບຖອດຖອນບົດຮຽນວາງແຜນ. | | ຄພມ | 3 ຄັ້ງ2009-2010 | 2.000 | |
| | - ສ້າງແຜນພັດທະນາ ຄວາມສາມາດ ຂອງຄະນະກຳມະການ ແລະ ທີມງານ : | ເມືອງ | | | | |
| 09 | √ ຝຶກອົບຮົມຄະນະກຳມະການ ຄະນະປະສານງານ | ເມືອງ | ຄພຂ/ຄພຂ | 2009-2010 | 3.000 | |
| | √ ຝຶກອົບຮົມທີມງານແພດ ທີມງານກູ້ໄພ | ພາຍໃນ/ຕ່າງປະ ເທດ | ຄພຂ/ຄພຂ | 2009-2010 | 4.000 | |
| | √ ກຳ ມະການ ທີມງານໄປທັດສະນະສຶ ກສາ ພາຍ ໃນ ແລະ ຕ່າງປະເທດ. | | ຄພຂ/ຄພຂ | 2009-2010 | 15.000 | |
| 10 | - ນຳຫຼັກສູດໄພພິບັດ ເຂົ້າໃນໂຮງຮຽນ. | 48ຮ/ຮ ປະຖົມ | PED | 2009-2010 | 48.000 | |
| 11 | - ສ້າງເຄື່ອຄ່າຍ ກະຈາຍຂ່າວ . | ເມືອງ | ຄພຂ/ພ/ນ ຖະ ແຫຼງ ຂ່າວ | 2009-2010 | 6.000 | |
| 12 | - ສ້າງລະບົບຕິດຕາມສະພາບແວດລ້ອມ ປະເມີນຜົນກະທົບ ແລະ ເຄື່ອນໄຫວເຝົ້າລະວັງສຸກເສີນ. | ເມືອງ | PSWD | 2009-2010 | 20.000 | |
| 13 | - ລົງປູກຈິດສຳນຶກ ໃຫ້ແກ່ຊາວບ້ານ ສຳລັບ ການ ຊ່ວຍເຫຼືອຕົນເອງ . | ບ້ານເປົ້າໝາຍ | ຄພຂ/ຄພມ | ............... | 10.000 | |
| 14 | - ສ້າງຕັ້ງກອງທຶນພັດທະນາບ້ານ . | 16 ບ້ານສ່ຽງໄພ | | 2009-2010 | 32.000 | |
| 15 | - ສ້າງຕັ້ງກອງທຶນສົ່ງເສີມແມ່ຍິງ. | 16 ບ້ານສ່ຽງໄພ | PSWD/PAFD | 2009-2010 | 16.000 | |
| 16 | - ກະກຽມເຄື່ອນໃຊຕ່າງໆ ທີ່ຈຳເປັນ ເພື່ອຕອບ ໂຕ້ ໄພພິບັດ ( ບຸກຄະລະກອນ , ອຸປະກອນເຄື່ອນໃຊ້ ໃນສູນຫຼົບໄພ . | ເມືອງ | PSWD/PSFD ຄພຂ/ຄພມ | 2009-2010 | 65.000 | |

| | | | | | | |
|---|---|---|---|---|---|---|
| 17 | - ເຄື່ອນໄຫວຕອບໂຕ້ໄພພິບັດ ປ້ອງກັນກອບກູ້ . | 16 Kisk Villages<br>Villages/ District | ຄພຂ/ຄພມ | 2009-2010 | 135.000 | |
| 18 | - ສຳຫຼວດປະເມີນຜົນເສຍຫາຍ ,ສ້າງແຜນ ຊ່ວຍເຫຼືອ ບັນເທົາທຸກ. | | ຄພຂ/ຄພມ | 2009-2010 | 2.000 | |
| 19 | - ຈັດຕັ້ງການຟື້ນຟູ ແລະ ຊ່ວຍເຫຼືອບັນເທົາທຸກ . | 16 Kisk Villages<br>Districts | ຄພຂ/ຄພມ | 2009-2010 | 250.000 | |
| 20 | - ສຶກສາຄົ້ນຄ້ວາມາດຕະການ ປ້ອງກັນໃນຕໍ່ໜ້າ . | | ຄພຂ/ຄພມ | 2009-2010 | 5.000 | |
| | | | | | 1.042.600 | |

- ການຈັດສັນ ແລະ ແບ່ງປັນງົບປະມານພ້ອມທັງະຫະນະ ແລະ ວັດຖຸອຸປະກອນຕ່າງໆແມ່ນຂື້ນກັບການຈັດຕັ້ງໂຄງປະກອບຂອງຄະນະກຳມະການ, ທີມງານຕ່າງບົນພື້ນຖານການຕິດຕາມຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນງານກິດຂະກຳໃນແຕ່ລະໄລຍະ, ນອກນັ້ນກໍ່ຕ້ອງໄດ້ມີການສະຫຼຸບລາຍງານຜົນການເຄື່ອນໄຫວເປັນປົກກະຕິ.

| | | |
|---|---|---|
| ເຊບັ້ງໄຟ,ວັນທີ…………………… | ເຊບັ້ງໄຟ,ວັນທີ……………… | ເຊບັ້ງໄຟ,ວັນທີ……………. |
| ຮອງເຈົ້າເມືອງໆເຊບັ້ງໄຟ | ຫົວໜ້າຫ້ອງການແຮງງານ | ຫົວໜ້າຫ້ອງ |
| ປະທານ DDMC | ສະຫວັດດີການ-ສັງຄົມການເມືອງ | ວ່າ ການປົກຄອງເມືອງ |
| | ຄະນະກຳມະການ DDMC | ຄະນະກຳມະການ DDMC |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------==000==--------

ແຂວງຄໍາມ່ວນ

ເມືອງເຊບັ້ງໄຟ

ເລກທີ່………./ຈມຊຟ

ລົງວັນທີ່……………..

# ຕໍ້ຕົກລົງ

## ຂອງເຈົ້າເມືອງ - ເມືອງເຊບັ້ງໄຟ

ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຄຸ້ມຄ້ອງໄພພິບັດຂັ້ນເມືອງເຊບັ້ງໄຟ

- ອີງໃສ່ ແຜນງານການສ້າງຄວາມແຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດແຜນງານກຽມພ້ອມປ້ອງກັນໄພນໍ້າຖ້ວມລະດັບແຂວງ,ເມືອງ,ຊຸມຊົນ.

ວັນທີ່ 15 ສິງຫາ 2008 -14 ພະຈິກ 2009 ຂອງສູນຕອບໂຕ້ໄພພິບັດແຫ່ງຊາດເພື່ອຮັບປະກັນໃນການແກ້ໄຂບັນຫາໄພພິບັດທີ່ເກີດຂື້ນຢູ່ທ້ອງຖິ່ນຂອງເມືອງແລະອີກດ້ານໜຶ່ງເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວສອດຄ່ອງກັບລະບົບການຈັດຕັ້ງແລະທ່ວງທັນກັບຄວາມຮຽກຮ້ອງຕ້ອງການເວລາທີ່ເກີດໄພພິບັດໃນແຕ່ລະຄັ້ງ.

ເຈົ້າເມືອງ-ເມືອງເຊບັ້ງໄຟຕົກລົງ

ມາດຕາ 1 ເຫັນດີແຕ່ງຕັ້ງຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນເມືອງເຊິ່ງປະກອບບັນດາທ່ານດັ່ງລຸ່ມນີ້:

1. ທ່ານ ບຸນສີ ພິມມະໄຊ ຮອງເຈົ້າເມືອງໆເຊບັ້ງໄຟ ເປັນປະທານ
2. ທ່ານ ຈັນທະໜອມ ນຽມມະນີວັນ ຫົວໜ້າຫ້ອງການສົ່ງເສີມກະສິກໍາ-ປ່າໄມ້ເມືອງ ເປັນຮ້ອງປະທານ
3. ທ່ານ ຄໍາພຸດ ນວນມະນີ ປະທ່ານກວດກາພັກ-ລັດ ເປັນຄະນະ
4. ທ່ານ ບຸນເພັງ ແອ້ສຸລິຍັນ ຫົວໜ້າຫ້ອງການຈັດຕັ້ງເມືອງ ເປັນຄະນະ
5. ທ່ານ ເກສອນ ພອນມະນີ ຫົວໜ້າໂຄສະນາອົບຮົມ ເປັນຄະນະ
6. ທ່ານ ຄໍາໃບ ປະຊາໄຊ ຫົວໜ້າຫ້ອງການ ຮສສ ເມືອງ ເປັນຄະນະ
7. ທ່ານ ສົມພົງ ແອ້ສຸລິຍັນ ເລຂາຊາວໜຸ່ມເມືອງ ເປັນຄະນະ
8. ທ່ານ ພ/ທ ສີຄວນ ຫົວໜ້າກອງບັນຊາການ ປ ກ ຊ ເປັນຄະນະ
9. ທ່ານ ຮ/ອ ພູຂົງ ຮອງກອງບັນຊາການປ ກ ສ ເມືອງ ເປັນຄະນະ

10. ທ່ານ ລິດວິໄລ ຮອງຫົວໜ້າ ຫ້ອງການສຶກສາເມືອງ ເປັນຄະນະ
11. ທ່ານ ບຸນບັງ ມາດມະນີວົງ ຮອງຫົວໜ້າ ຫ້ອງການສົ່ງເສີມສຸກຂະພາບ ເປັນຄະນະ
12. ທ່ານ ສຸປີນ ຈັນທະວົງ ຫົວໜ້າ ຫ້ອງການໆເງິນເມືອງ ເປັນຄະນະ
13. ທ່ານ ນາງສຸກາ ຮອງຫົວໜ້າອຸດສາຫະກຳ-ການຄ້າເມືອງ ເປັນຄະນະ
14. ທ່ານ ນາງ ດາວພະສຸກ ປະທ່ານ ສະຫະພັນແມ່ຍິງເມືອງ ເປັນຄະນະ
15. ທ່ານ ບົວຄີ ຫົວໜ້າຫ້ອງການແຜນການ-ການລົງທຶນ ເປັນຄະນະ
16. ທ່ານ ບຸນຖົມ ຫົວໜ້າໄຟຟ້າ ເປັນຄະນະ
17. ທ່ານ ເພັດສະເດັດ ຫົວໜ້ານອົງການທີ່ດິນນ້ຳ ແລະ ສິ່ງແວດລ້ອມ ເປັນຄະນະ
18. ທ່ານ ສອນເພັດ ມິດອາລຸນ ປະທ່ານກະມະບານເມືອງ ເປັນຄະນະ
19. ທ່ານ ເໜືອຄຳ ວິລາວົງ ຮອງ ຫົວໜ້າ ຫ້ອງວ່າການເມືອງ ເປັນຄະນະ
20. ທ່ານ ບຸນມີ ຫົວໜ້າຍຸດຕິທຳເມືອງ ເປັນຄະນະ
21. ທ່ານ ສິມສັກ ຫົວໜ້າຖະແຫຼງຂ່າວ ແລະ ວັດທະນະທຳ ເປັນຄະນະ

<u>ມາດຕາ 2</u> : ເຫັນດີແຕ່ງຕັ້ງຄະນະກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງປະກອບດ້ວຍບັນດາສະຫາຍດັ່ງນີ້:

1. ທ່ານ ເໜືອຍຄຳ ຮອງຫົວໜ້າຫ້ອງວ່າການເມືອງ ເປັນຫົວໜ້າ
2. ທ່ານ ສີສົມພອນ ວິຊາການ ຫ້ອງການສົ່ງເສີມກສິກຳ ເປັນຮອງ
3. ທ່ານ ບຸນໂຍ ຫົວໜ້າກໍ່ສ້າງຮາກຖານ ເປັນຄະນະ
4. ທ່ານ ວະສັນ ພະນັກງານ ອ ສ ຄ ເມືອງ ເປັນຄະນະ
5. ທ່ານ ບຸນແຍງ ຮອງຫົວໜ້າ ຍ ທ ຂ ເປັນຄະນະ
6. ທ່ານ ຮ/ອ ທັດສະດີ ປ ກ ຊ ເປັນຄະນະ
7. ທ່ານ ຮ/ອ ບຸນທົງ ປ ກ ສ ເປັນຄະນະ
8. ທ່ານ ອຳພອນ ຫ້ອງການສຶກສາ ເປັນຄະນະ
9. ທ່ານ ນ. ນວນຕາ ຮອງປະທ່ານສະຫະພັນແມ່ຍິງເມືອງ ເປັນຄະນະ
10. ທ່ານ ນ. ວາດສະໜາ ຮ ສ ສ ເມືອງ ເປັນຄະນະ
11. ທ່ານ ນ ເຂັມພອນ ຫ້ອງການຊາວໜຸ່ມເມືອງ ເປັນຄະນະ
12. ທ່ານ ນ. ວຽງສະໄໜ ຫ້ອງການຈັດຕັ້ງເມືອງ ເປັນຄະນະ
13. ທ່ານ ຂັນທອງ ພະນັກງານ ສາທາ ເມືອງ ເປັນຄະນະ
14. ທ່ານ ສີສຸພັນ ຫ້ອງການ ທະແຫຼງຂ່າວວັດທະນະທຳ ເປັນຄະນະ
15. ທ່ານ ສາຍຄຳ ສຸພາພອນ ຮອງຫົວໜ້າໂຄສະນາອົບຮົມ ເປັນຄະນະ
16. ທ່ານ ນາງ ຄຳຫຼ້າ ແຜນການການລົງທຶນ ເປັນຄະນະ
17. ທ່ານ ນາງ ບຸນທະວີ ຫ້ອງການຄຸ້ມຄອງທີ່ດິນນ້ຳ ແລະ ສິ່ງແວດລ້ອມ ເປັນຄະນະ
18. ທ່ານ ສົມໄຊ ຫ້ອງການການເງິນເມືອງ ເປັນຄະນະ

ມາດຕາ3. ວ່າດ້ວຍສິດແລະໜ້າທີ່ຂອງຄະນະປະທານ, ຮອງປະທານແລະຄະນະກຳມະການ.

- ວ່າດ້ວຍໜ້າທີ່ຂອງຮອງປະທານ.
    1. ຮຽກປະຊຸມສາມັນແລະວິສາມັນ.
    2. ປະທານກອງປະຊຸມ.
    3. ຊີ້ນຳລວມສະພາບໄພພິບັດພາຍໃນເມືອງ.
    4. ມີສິດແຕ່ງຕັ້ງແລະມອບໝາຍວຽກໃຫ້ຮອງປະທານວ່າການແທນໃນເວລາຕິດພາລະກິດທາງລັດຖະການ.
- ວ່າດ້ວຍໜ້າທີ່ຂອງຮອງປະທານ.
    1. ເຮັດວຽກຕາມການມອບໝາຍຂອງປະທານ.
    2. ສັງລວມຂໍ້ມູນກ່ຽວກັບສະພາບການຄຸ້ມຄອງໄພພິບັດຂັ້ນເມືອງ ເພື່ອລາຍງານໃຫ້ປະທານ.
- ວ່າດ້ວຍສິດໜ້າຂອງກຳມະການ.

1. ຄະນະກຳມະການຈາກຫ້ອງການສິ່ງເສີມກະສິກຳ-ປ່າໄມ້ ມີໜ້າທີ່ຈັດຕັ້ງການດຳເນີນຕິດຕາມແຈ້ງ, ເຕືອນໄພ,ໃຫ້ຂໍ້ແນະນຳແລະສຶກສາຊຸມຊົນ.

2. ຄະນະກຳມະການຈາກ ປ ກ ສ ແລະ ຫ້ອງການ ຍທຂ ມີໜ້າທີ່ໃນການຈັດຕັ້ງແລະນຳໃຊ້ກຳລັງ ພ້ອມທັງພາຫະນະເຂົ້າໃນການເຄື່ອນຍ້າຍປະຊາຊົນອອກຈາກພື້ນທີ່ ທີ່ອັນຕະລາຍຈາກໄພພິບັດ.

3. ຄະນະກຳມະການຈາກກອງບັນຊາການ ປກສ ມີໜ້າທີ່ຈັດຕັ້ງການນຳໃຊ້ກຳລັງກອງບັນຊາການ ວິຊາການສະເພາະ ເພື່ອເຂົ້າໃນການຄົ້ນຄ້ວາຫາກູ້ໄພ ແລະ ຮັກສາຄວາມສະຫງົບໃນເມືອງມີໄພພິບັດເກີດຂື້ນ.

4. ຄະນະກຳມະການ ຈາກຫ້ອງການສຶກສາ ມີໜ້າທີ່ຈັດຕັ້ງການຝຶກອົບຮົມ ໃຫ້ແກ່ຄູອາຈານແລະນັກຮຽນຮັບຮູ້ກ່ຽວກັບວຽກງານຄຸ້ມຄອງໄພພິບັດແລະນຳໃຊ້ຕຳລາການສອນກ່ຽວກັບວຽກງານຄຸ້ມໄພພິບັດ,ພ້ອມພັນເພື່ອແຕ່ງຕັ້ງຜູ້ຮັບຜິດຊອບວຽກງານຄຸ້ມຄອງໄພພິບັດຢູ່ບັນດາໂຮງຮຽນຕ່າງໆ.

5. ຄະນະກຳມະການຈາກຫ້ອງການສາທາເມືອງ ມີໜ້າທີ່ຈັດຕັ້ງໜ່ວຍງານວິຊາການ ສະເພາະເພື່ອໃຊ້ໃນການຫ້າງຫາກະກຽມຕ້ານໄພພິບັດໃນສາມໄລຍະ(ປະຖົມພະຍາບານ,ສຸຂະສຶກສາແລະອານາໄມສິ່ງແວດລ້ອມ).

6. ຄະນະກຳມະການຈາກຫ້ອງການໆເງິນ ,ຫ້ອງການໆຄ້າ,ຫ້ອງການຮສສ ມີໜ້າທີ່ຈັດຕັ້ງຊອກຫາແຫລ່ງທຶນແລະເຄື່ອງຊ່ວຍເຫລືອບັນເທົາທຸກເພື່ອມາຈັດຕັ້ງບັນດາກິດຈະກຳຂອງວຽກງານຄຸ້ມຄອງໄພພິບັດ.

7. ຄະນະກຳມະການຈາກອົງການຈັດຕັ້ງມະຫາຊົນຊາວໜຸ່ມ ແນວລາວສ້າງຊາດ,ສະຫະພັນແມ່ຍິງ,ສະຫະພັນກຳມະບານ ມີໜ້າທີ່ຈັດຕັ້ງລະດົມກ້ອນກຳລັງເຂົ້າໃນກິດຈະກຳຊ່ວຍເຫລືອສຸກເສີນ.

8. ຄະນະກຳມະການຈາກຫ້ອງການແຜນການ ແລະການຮ່ວມມືມີໜ້າທີ່ໃນການເຊື່ອມຕໍ່ວຽກງານຄຸ້ມຄອງໄພພິບັດເຂົ້າໃນແຜນພັດທະນາຂອງເມືອງ.

- ວ່າດ້ວຍສິດໜ້າທີ່ຂອງຄະນະກອງເລຂາ.

    1. ກະກຽມປັດໃຈທີ່ຈຳເປັນສຳລັບການຈັດຕັ້ງກອງປະຊຸມຂອງຄະນະກຳມະການ.
    2. ປະສານງານລະຫວ່າງຂະແໜງການຕ່າງໆພາຍໃນເມືອງ,ແຂວງ.

3. ຮ່ວມກັບຄະນະກຳມະການລົງຕິດຕາມບ້ານທີ່ຖືກກະທົບຫຼືສູນລົບໄພ.
4. ສ້າງບົດສະຫຼຸບລາຍງານໃຫ້ຄະນະກຳມະການ ແລະ ລາຍງາຍງານຂັ້ນເທິງຂອງຕົນແຕ່ລະຂັ້ນ.
5. ລາຍງານຜົນກະທົບຈາກໄພນ້ຳຖ້ວມໃນຂັ້ນເທິງຂອງຕົນ.

ມາດຕາ 4 . ມອບໃຫ້ບັນດາທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ມາດຕາ 5 . ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ທີ່ເຊບັ້ງໄຟ,ວັນທີ່..........................

ທ່ານ ເຈົ້າເມືອງ - ເມືອງເຊບັ້ງໄຟ